**<u>ກຸ່ມຜູ້ຈັດທໍາ ຄໍາແນະນໍາສໍາລັບຄຣູສອນ</u>**
Copyright © 2001 by BAPTISTWAY PRESS®.
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄໍາຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທໍາອິດ: ເດືອນ ມີນາ, ໒໐໐໐

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Coordinator, Church Health and Growth Section: H. Lynn Eckeberger
Director, Bible Study/Discipleship Center: Dennis Parrott
Administrator, Curriculum Development Office: Bernard M. Spooner
Publishing consultant: Ross West, Positive Difference Communications

Language Materials Team

Teaching Procedures Writer for Unit 1
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Unit 1
Phaisane Somsith, Samakeetam Baptist Fellowship, Dallas, Texas

Teaching Procedures Writer for Unit 2
Sidney Kahn, Saginaw Community Church, Fort Worth, Texas
Editor for Unit 2
Phaisane Somsith, Samakeetam Baptist Fellowship, Dallas, Texas

Teaching Procedures Writer for Unit 3
Bounhome Phommachanh, Lao-Thai Baptist, San Antonio, Texas
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Unit 3
Phaisane Somsith, Samakeetam Baptist Fellowship, Dallas, Texas

Facilitator for the LAOTIAN TEAM
Joe Haag, Director of Program Planning and Special Moral Concerns,
Christian Life Commission

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ຄຳແນະນຳຄູສອນ
# ເຖິງເວລາແລ້ວ
# ບົດຮຽນບົດທີ່ 1

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ມາຣະໂກ 1:1-15
<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ມາຣະໂກ 1:1-15
<u>ຈຸດສຳຄັນຂອງບົດຮຽນນີ້:</u> ເພື່ອບອກໃຫ້ຮູ້ວ່າພຣະເຢຊູຄຣິດໄດ້ປະກາດເຣື່ອງແຜ່ນດິນສວັນຂອງພຣະເຈົ້າ.
<u>ຄຳຖາມເພື່ອການສຳຣວດ:</u> ການປະກາດຂອງພຣະເຢຊູມີຄວາມສັມພັນກັບພວກຜູ້ທຳນວາຍໄວ້ຢ່າງໃດ?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອໃຫ້ເຮົາທັງຫລາຍໄດ້ຮູ້ວ່າການປະກາດຂອງພຣະເຢຊູແມ່ນເຣື່ອງທີ່ພວກຜູ້ທຳນວາຍໄດ້ກ່າວໄວ້ໃນສມັຍເດີມນັ້ນເອງ

| <u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ</u> |
| --- |
| ● ແບ່ງປັນຂ່າວປະເສີດຂອງພຣະເຢຊູຄຣິດກັບທຸກຄົນເທົ່າທີ່ເຮົາມີໂອກາດແລະຫາໂອກາດຫາກບໍ່ມີໂອກາດ. |
| ● ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີຕໍ່ຄົນທັງປວງ. |

## <u>ແຜນການສຳລັບການສອນ</u>

1. ຂີດຂັ້ນກະດານເປັນສອງສ່ວນ. ກ້ຳຊ້າຍຂຽນຫົວເຣື່ອງວ່າ **<u>ຂ່າວດີ</u>** ແລະອີກກ້ຳຂວາຂຽນວ່າ **<u>ຂ່າວຮ້າຍ</u>** .
   ກ. ຖາມນັກຮຽນຢາກຄົ້ນຄ້ວາຂ່າວໃດກ່ອນ?
   ຂ. ໃຫ້ຕົວຢ່າງຂ່າວດີແມ່ນເງິນເດືອນຂຶ້ນ ແລະຂ່າວຮ້າຍແມ່ນຖືກໄລ່ອອກງານ.
   ຄ. ຖາມນັກຮຽນ ຂ່າວດີທີ່ສຸດທີ່ທ່ານເຄີຍໄດ້ຍິນມາກ່ອນແມ່ນຂ່າວເຣື່ອງໃດ? ແລະຂ່າວຮ້າຍເດ?
   ຂຽນຂ່າວດີແລະຂ່າວຮ້າຍທຸກຢ່າງທີ່ນັກຮຽນກ່າວລົງໃນກະດານທີ່ຂີດເສັ້ນໄວ້ແລ້ວທຸກຢ່າງ.

2. ອ່ານພຣະທັມມາຣະໂກ1:1-15 ແລະບອກນັກຮຽນວ່າ ນີ້ແມ່ນຂ່າວດີເລີດຈົນກາຍເປັນຂ່າວປະເສີດກວ່າຂ່າວອື່ນໆ ໃນໂລກ.

3. ຂຽນລົງກະດານກ້ຳຂວາຂ່າວດີ <u>ພຣະເຈົ້າໃຫ້ໂອກາດ</u> ຊຶ່ງມີຄວາມໝາຍວ່າໂອກາດໃຫ້ທຸກຄົນກັບໃຈທັນທີຈາກທາງອະທັມທຸກຢ່າງ ແລະຮັບເຊື່ອໃນພຣະເຢຊູຄຣິດ ກ່ອນການພິພາກສາລົງໂທດ.
   ກ. ໂອກາດແຫ່ງການຖິ້ມໃຈເກົ່າເອົາໃຈໃໝ່ແລະຮັບເຊື່ອພຣະເຢຊູຄຣິດນັ້ນມີຕໍ່ເມື່ອມີຊີວິດເທົ່ານັ້ນ, ເມື່ອຕາຍໄປແລ້ວກໍໝົດໂອກາດ.
   ຂ. ຂໍໃຫ້ນັກຮຽນຜູ້ນຶ່ງອ່ານ (ມຣກ 1:6-15) ອະທິບາຍຄຳວ່າຂ່າວດີ ແມ່ນຂ່າວການເກີດຂອງພຣະເຢຊູ ແປວ່າພຣະຜູ້ຊ່ອຍ (ໂຜດ) ໃຫ້ລອດມາບັງເກີດ, ແລະຕາຍແທນຄວາມຜິດບາບ ແລະພຣະອົງຍັງຟື້ນພຣະຊົນຊຶ່ງເປັນເຄື່ອງຄ້ຳປະກັນວ່າທຸກຄົນທີ່ເຊື່ອໃນພຣະອົງຈະເປັນຄືນມາຄືພຣະອົງ.

4. ໂຢຮັນໄດ້ປະກາດເຣື່ອງໃດ? ຄົນທັງຫລາຍເຮັດແນວໃດເມື່ອໄດ້ຍິນຄຳປະກາດຂອງໂຢຮັນ?
   ກ. ຄຳວ່າບັບຕິສະມາທີ່ໂຢຮັນໄດ້ກ່າວໝາຍເຖິງການຖິ້ມໃຈເກົ່າເອົາໃຈໃໝ່ໃນພຣະເຢຊູຄຣິດແລະບັບຕິສະມາ ນັ້ນຈຳຕ້ອງຈຸ່ມລົງທັງຕົວ
   ຂ. ພຣະເຢຊູໄດ້ບັບຕິສະມາເປັນຕົວຢ່າງໃນ (ມັດທາຍ 3:15) ແຕ່ບໍ່ໄດ້ໝາຍຄວາມວ່າພຣະເຢຊູມີບາບຈຶ່ງຮັບ ບັບຕິສະມາ.
   ຄ. ບັບຕິສະມາບໍ່ໄດ້ຊ່ອຍໃຫ້ເຮົາທັງຫລາຍຂຶ້ນສວັນ ແລະກໍ່ບໍ່ໄດ້ໝາຍຄວາມວ່າລ້າງບາບ. ແຕ່ເປັນສັນຍາລັກໃນ ການຖິ້ມໃຈເກົ່າເອົາໃຈໃໝ່ ແລະມີສ່ວນຮ່ວມໃນການຕາຍແລະຟື້ນພຣະຊົນຂອງພຣະເຢຊູ.
   ງ. ການຊຳຣະລ້າງບາບນັ້ນບໍ່ມີແມ່ນ້ຳໃດໆ ຫລືທະເລໃດໆສາມາດຊຳຣລະລ້າງໄດ້ນອກຈາກພຣະໂລຫິດ (ເລືອດ) ຂອງພຣະເຢຊູເທົ່ານັ້ນ.

5. ພຣະເຢຊູຊົງປະກາດເຣື່ອງຣາຊອານາຈັກຂອງພຣະເຈົ້າ (ສວັນ) ໄດ້ມາໃກ້ແລ້ວນັ້ນໝາຍເຖິງຕົວພຣະອົງເອງ ເປັນອານາຈັກນັ້ນ.
   ກ. ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່ເຊື່ອໃນຂ່າວປະເສີດ ແປວ່າເຊື່ອໃນພຣະເຢຊູ ເພາະພຣະອົງເປັນຂ່າວປະເສີດ.
   ຂ. ຣາຊອານາຈັກຂອງພຣະເຈົ້າໄດ້ມາໃກ້ແລ້ວ ແປວ່າພຣະເຢຊູໄດ້ສະເດັດມາແລ້ວ ຈົ່ງຮັບເຊື່ອເສັຽ.
   ຄ. ຄຳວ່າໃກ້ນັ້ນມີຄຳຖາມກັນວ່າໃກ້ແນວໃດ? ຄຳວ່າໃກ້ນີ້ມີຄວາມໝາຍວ່າ ເຮົາສາມາດຮັບເຊື່ອເອົາໄດ້ທຸກເວ ລາທຸກສະຖານທີ່.

6. ໂຢຮັນໃຫ້ບັບຕິສະມາດ້ວຍນ້ຳ ສ່ວນການຮັບພຣະວິນຍານນັ້ນຂຶ້ນຢູ່ກັບເຮົາແລະພຣະເຈົ້າ. ຫາກເຮົາເຊື່ອດ້ວຍ ຄວາມຈິງໃຈເຮົາກໍໄດ້ຮັບພຣະວິນຍານເໝືອນດັ່ງພຣະເຢຊູຂຶ້ນມາຈາກນ້ຳນັ້ນ. ຖ້າເຮົາຫາກເຊື່ອແບບບໍ່ຈິງໃຈ ເຮົາກໍໄດ້ຮັບບັບຕິສະມາດ້ວຍນ້ຳຈາກອາຈານເທົ່ານັ້ນ.

7. ດ້ວຍເຫດນີ້ເຮົາທັງຫລາຍສົມຄວນແລ້ວຈະຖິ້ມໃຈເກົ່າເອົາໃຈໃໝ່ຢ່າງແທ້ຈິງ, ເຮົາບໍ່ສົມຄວນຈະຫລອກລວງຕົນ ເອງອີກຕໍ່ໄປ. ບອກນັກຮຽນທຸກຄົນວ່າ ນີ້ເປັນໂອກາດຂອງພວກເຮົາທີ່ຈະກັບໃຈຢ່າງແທ້ຈິງ.

8. ຖາມຫ້ອງຮຽນ ວັນນີ້ມີໃຜບໍ່ຍອມຮັບເຊື່ອພຣະເຢຊູ, ຫັນໜີຈາກທາງຊົ່ວຮ້າຍ ແລະຮັບເອົາພຣະເຢຊູຄຣິດມາເປັນ ພຣະຜູ້ຊ່ອຍຂອງທານ. ( ໃຫ້ໂອກາດນັກຮຽນຈັກສອງສາມນາທີ ). ຫາກມີຄົນຮັບເຊື່ອຄຣູກໍອ້ອນວອນໃຫ້ລາວ.

9. ຄຣູນຳພາການອ້ອນວອນຂອບພຣະຄຸນໃນຂ່າວປະເສີດ ແລະເປີດໂອກາດໃຫ້ແກ່ເຮົາທັງຫລາຍໄດ້ກັບເນື້ອກັບຕົວ.

# ຄຳແນະນຳຄູສອນ
# ຢູ່ຢ່າງພຣະຄຣິດ
# ບົດຮຽນທີ 2

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ມັດທາຍ 4:23--5:16
<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ມັດທາຍ 4:23--7:28
<u>ຈຸດສຳຄັນຂອງບົດຮຽນນີ້:</u> ເພື່ອບອກໃຫ້ຮູ້ວ່າພຣະເຢຊູຄຣິດໄດ້ສອນໃຫ້ເຮົາທັງຫລາຍເຮັດຕາມແບບຢ່າງຂອງພຣະອົງ.
<u>ຄຳຖາມເພື່ອການສຳຣວດ:</u> ພຣະປະສົງຂອງພຣະເຈົ້າໃຫ້ຂ້າພະເຈົ້າຢູ່ຢ່າງໃດ?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອໃຫ້ເຮົາທັງຫລາຍໄດ້ສຳຣວດຕົນເອງທຽບກັບພຣະທັມທີ່ພຣະອົງສອນ.

<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ</u>

- ນຳຂ່າວປະເສີດເຣື່ອງພຣະເຢຊູຄຣິດໄປຍັງທຸກຄົນເທົ່າທີ່ເຮົາມີໂອກາດໂອ້ລົມແລະຫາໂອກາດໂອ້ລົມ.
- ຊ່ອຍເຫລືອເບິ່ງແຍງທຸກຄົນທີ່ຢູ່ໃນຄວາມຂັດສົນ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີຕໍ່ຄົນທັງປວງ.

## <u>ແຜນການສຳລັບການສອນ</u>

1. ຂໍຄຳເຫັນຈາກນັກຮຽນເຣື່ອງຄົນເຈັບເປັນໃນທຸກວັນນີ້ມີຫຍັງແດ່ແລະຄຣູກໍຂຽນທຸກປະເພດລົງໃນກະດານ.

2. ອະທິບາຍໃຫ້ນັກຮຽນຟັງພຣະເຢຊູປິ່ນປົວທຸກໆພະຍາດທາງຮ່າງກາຍໃຫ້ຫາຍດີ.ເຖິງແມ່ນຮ່າງກາຍບໍ່ມີຄວາມເຈັບປວດ ພຣະອົງຍັງມີພຣະປະສົງຢາກໃຫ້ປະຊາຊົນມີຄວາມສຸກອີກດັ່ງນັ້ນພຣະອົງຈຶ່ງສອນເຣື່ອງຄວາມສຸກ.

3. ເອົາເຈັ້ຽນ້ອຍໃຫ້ນັກຮຽນຂຽນຜູ້ທີ່ເຂົາເຈົ້າຮູ້ວ່າສາມາດປິ່ນປົວຮ່າງກາຍແລະຄວາມຄິດຈິດໃຈໄດ້ຮວມທັງທ່ານໝໍ, ຜູ້ອົບຣົມຕ່າງໆທີ່ແກ້ໄຂບັນຫາຂັດຂ້ອງໝອງໃຈ ຫລືຜູ້ປົວຄວາມຄິດຈິດໃຈຄົນ, ຜູ້ດູແລຕ່າງໆ.

4. ຈາກນັ້ນເອົາເຈັ້ຽນ້ອຍອີກໃບນຶ່ງໃຫ້ນັກຮຽນຂຽນຊື່ນາຍຄຣູທີ່ເຄີຍສອນເຂົາເຈົ້າ ນັບແຕ່ຄຣູສອນໂຮງຮຽນປະຖົມມາຕລອດເຖິງຄຣູສອນໂຮງຮຽນວັນອາທິດໃນເວລານີ້.

5. ໃຫ້ນັກຮຽນເອົາເຈັ້ຽນ້ອຍທັງສອງມາຮວມກັນແລ້ວບອກນັກຮຽນວ່າ ພຣະເຢຊູເປັນທັງຜູ້ປິ່ນປົວຮ່າງກາຍ ແລະເປັນຄຣູສອນທີ່ປະເສີດກວ່າຄຣູທຸກຄົນ ເພາະພຣະອົງຊົງເປັນພຣະເຈົ້າ. ດ້ວຍວ່າພຣະອົງຊົງເປັນພຣະເຈົ້າພຣະອົງຈຶ່ງມີພຣະປະສົງໃຫ້ທຸກຄົນມີຄວາມສຸກແລະຮູ້ຈັກຄວາມສຸກອັນຖືກຕ້ອງ.

6. ຖາມນັກຮຽນແມ່ນຫຍັງຄືຄວາມສຸກຂອງທ່ານ? ຫລັງຈາກນັກຮຽນ ຕອບຊົ່ວລະຍະນຶ່ງຄຣູແນະນຳຄວາມສຸກ ອັນແທ້ຈິງນັ້ນພຣະເຢຊູຊົງສອນມີດັ່ງນີ້: ຂໍໃຫ້ນັກຮຽນອ່ານ ມັດທາຍ 4:--5:16

7. ຄຣູອະທິບາຍເຣື່ອງຄວາມສຸກດັ່ງນີ້:

ກ. "ຜູ້ໃດຍາກຈົນຝ່າຍຈິດວິນຍານກໍເປັນສຸກ ເພາະວ່າແຜ່ນດິນສວັນເປັນຂອງຜູ້ນັ້ນ" ມີຄວາມໝາຍວ່າຜູ້ໃດຖິ້ມຄວາມຄິດຝ່າຍໂລກ (ບໍ່ຄິດນຳຫລືເອົາໃຈໃສ່ຂອງໃນໂລກ)ແລະເຊື່ອໃນພຣະອົງກໍຈະໄດ້ໄປຢູ່ແຜ່ນດິນສວັນ.

ຂ. "ຜູ້ໃດໂສກເສົ້າກໍເປັນສຸກ ເພາະວ່າຜູ້ນັ້ນຈະໄດ້ຮັບການຊົງເລົ້າໂລມ" ມີຄວາມໝາຍວ່າ ເສັຽໃຈ ແລະກັບໃຈ ເພາະຕົນເອງກະທຳຜິດ, ຢຸດຕິຄວາມຄິດຊົ່ວຮ້າຍ. ຍອມສາຣະພາບຄວາມຜິດແລະຄວາມບາບທັງໝົດທີ່ເຮັດຜ່ານມາ ທຸກຄົນທີ່ສາຣະພາບພຣະອົງກໍຊົງເມດຕາ ອະພັຍໃຫ້.

ຄ. "ຜູ້ໃດມີໃຈອ່ອນຫວານກໍເປັນສຸກ ເພາະວ່າຜູ້ນັ້ນຈະໄດ້ຮັບແຜ່ນດິນສວັນເປັນມໍຣະດົກ" ມີຄວາມໝາຍວ່າ ເປັນຄົນຍອມຖ່ອມຕົວ, ບໍ່ເປັນຄົນອວດອ້າງ, ບໍ່ເປັນຄົນຈອງຫອງ, ແຕ່ມີໃຈອ່ອນສຸພາບເມດຕາສົງສານ ເໝືອນພຣະເຢຊູຊົງເມດຕາສົງສານຕົນເອງ ຜູ້ນັ້ນຈະໄດ້ຮັບແຜ່ນດິນສວັນເປັນມໍຣະດົກ.

ງ. "ຜູ້ໃດອຶດຫິວຄວາມຊອບທັມກໍເປັນສຸກ ເພາະວ່າພຣະເຈົ້າຈະຊົງໃຫ້ອີ່ມບໍຣິບູນ" ມີຄວາມໝາຍວ່າຜູ້ນັ້ນຊອກສແວງຫາພຣະເຈົ້າແລະຄວາມຊອບທັມຂອງພຣະອົງ ຄົນນັ້ນພຣະເຈົ້າຈະໃຫ້ມີເນືອງໆ.

ຈ. "ຜູ້ໃດມີໃຈກະຣຸນາກໍເປັນສຸກ ເພາະຜູ້ນັ້ນຈະໄດ້ຮັບພຣະກະຣຸນາຕອບ" ມີຄວາມໝາຍວ່າຜູ້ນັ້ນມີໃຈເອັນດູສົງສານຍອມໃຫ້ຜູ້ອື່ນ ຜູ້ໃດທີ່ໃຫ້ຜູ້ອື່ນພຣະເຈົ້າກໍຈະໃຫ້ຜູ້ນັ້ນ.

ສ. "ຜູ້ໃດມີໃຈບໍຣິສຸດກໍເປັນສຸກ ເພາະວ່າຜູ້ນັ້ນຈະໄດ້ເຫັນພຣະເຈົ້າ" ມີຄວາມໝາຍວ່າ ເຊື່ອດ້ວຍຄວາມຈິງໃຈ ບໍ່ເປັນຄົນໜ້າຊື່ໃຈຄົດ, ບໍ່ເປັນຄົນໂລບມາກ, ບໍ່ເປັນຄົນສໍ້ໂກງ ບໍ່ເປັນຄົນກ້ຽງແຕ່ນອກທາງໃນເປັນໜາກເດື່ອ (ຟາຣີຊາຍ) ຄົນນັ້ນຈະໄດ້ເຫັນພຣະເຈົ້າຕໍ່ໜ້າຕໍ່ຕາຊຶ່ງເປັນກຽດອັນສູງທີ່ໄດ້ເຫັນພຣະອົງ.

ຊ. "ຜູ້ໃດສ້າງຄວາມສງົບສຸກກໍເປັນສຸກ ເພາະວ່າພຣະເຈົ້າຈະຊົງເອີ້ນຜູ້ນັ້ນວ່າເປັນບຸດ" ມີຄວາມໝາຍວ່າ ຢູ່ຢ່າງສງົບສຸກ, ຢູ່ຢ່າງຖືກຕ້ອງປອງດອງກັບເພື່ອນບ້ານ ພ້ອມທັງສ້າງຄວາມສງົບສຸກ, ອວຍພອນສັຕຣູ (ເພາະ ພຣະເຢຊູຊົງເຮັດຢ່າງນີ້) ເຮັດຕາມແບບຢ່າງພຣະເຢຊູ ກໍຊົງຖືວ່າລູກຜູ້ຟັງຄວາມ.

ຍ. "ຜູ້ໃດຖືກຂົ່ມເຫັງເພາະຄວາມຊອບທັມກໍເປັນສຸກ ເພາະວ່າແຜ່ນດິນສັວນເປັນຂອງຜູ້ນັ້ນ" ມີຄວາມໝາຍວ່າ ຜູ້ໃດຖືກກົດຂີ່ຂົ່ມເຫັງ, ຖືກຈັບກຸມ, ຖືກເຣື່ອງຍ້ອນການປະກາດຂ່າວປະເສີດ ພຣະເຈົ້າຈະຊົງຈັດຫາໃຫ້ຜູ້ທີ່ຖືກເສັຽຫາຍເພາະພຣະນາມຂອງພຣະອົງ.

8. ເຣື່ອງຄວາມສຸກເຫລົ່ານີ້ເປັນການເຂົ້າໃຈຍາກສຳລັບຄົນທີ່ບໍ່ຮູ້ຈັກກັບພຣະເຢຊູຄຣິດດັ່ງນັ້ນພຣະອົງຈຶ່ງຊົງກ່າວວ່າ ທ່ານທັງຫລາຍເປັນເກືອແລະເປັນແສງສວ່າງສຳລັບໂລກ ຊຶ່ງໝາຍເຖິງທ່ານແລະຂ້າພະເຈົ້ານັ້ນເອງ. ຄົນທີ່ບໍ່ຮູ້ຈັກພຣະອົງ ກໍຈະຮູ້ຈັກພຣະອົງຍ້ອນການປະກາດ, ການຢູ່ກິນແບບເປັນຕົວຢ່າງຂອງພວກເຮົາ.

ກ. ອະທິບາຍເກືອມີຣົດເຄັມປຸງອາຫານໃຫ້ແຊບນົວ, ເອືອບຊີ້ນແລະປາບໍ່ໃຫ້ເນົ່າ, ເອົາເກືອໃສ່ອາຫານຫລາຍກິນກໍເຄັມ ແລ້ວກໍ ເລັ່ງນ້ຳ (ແປວ່າກິນນ້ຳຫລາຍ) (ຊີວິດຄຣິສຕຽນມີຣົດຊາດ, ຮວມທັງການປະກາດ, ການສອນ, ການປາກເວົ້າ, ແລະກິຣິຍາທ່າທາງທັງໝົດ) ຫາກຄຣິສຕຽນເປັນເຊັ່ນນີ້ກັນໝົດ ຄົນທີ່ເຫັນກໍຢາກເປັນຄຣິສຕຽນ ດ້ວຍເຫດນີ້ແຫລະພຣະເຢຊູຈຶ່ງປຽບທຽບເກືອທີ່ໝົດຣົດເຄັມຄືຄຣິສຕຽນທີ່ບໍ່ເຂົ້າທ່ານັ້ນເອງ.

ຂ. ອະທິບາຍເຣື່ອງຄວາມສວ່າງ: ຢ່າເຂົ້າໃຈຜິດວ່າທ່ານແລະຂ້າພະເຈົ້າເປັນແສງສວ່າງໂດຍກົງ. ເຮົາຍັງເຮັດ

ຫລາຍຢ່າງທີ່ບໍ່ເໝາະສົມຢູ່. ເຮົາທັງຫລາຍບໍ່ແມ່ນແສງສວ່າງໂດຍກົງແຕ່ເປັນແສງສວ່າງແບບແສງສະທ້ອນຈາກແສງສວ່າງຂອງພຣະເຈົ້າ. ຕົວຢ່າງ: ຢູ່ຕາມແຄມທາງຫລວງໃຫຍ່ເຮົາຈະເຫັນແສງສວ່າງສ່ອງໃຫ້ເຮົາເຫັນຂອບທາງເມື່ອຕາໄຟຣົດເຮົາສ່ອງໄປໃສ່ເຄື່ອງສະທ້ອນນ້ອຍໆຕາມແຄມທາງ. ຫາກບໍ່ມີຕາໄຟຣົດເຮົາສ່ອງອອກໄປກ່ອນ ແສງນັ້ນກໍຈະບໍ່ມີເລີຍ. ເຮົາທັງຫລາຍເປັນເໝືອນແສງສະທ້ອນຕາມແຄມທາງເມື່ອແສງສວ່າງຂອງພຣະເຈົ້າສາດສ່ອງໃສ່ຕົວເຮົາໆກໍກາຍເປັນແສງສວ່າງສໍາລັບໂລກ ເພື່ອຊ່ອຍຄົນທັງຫລາຍໄດ້ດໍາເນີນຊີວິດໃນຄວາມສວ່າງ. ຕົວຢ່າງອີກອັນນຶ່ງຄືດອກໄຟຟ້າຈະບໍ່ຮຸ່ງເອງຈົນກວ່າປະກອບກັນຄົບຖ້ວນສາກ່ອນແລະຈາກນັ້ນພະລັງໄຟຟ້າທີ່ເບິ່ງບໍ່ເຫັນຈະມາຈູດດອກໄຟນັ້ນໃຫ້ຮຸ່ງແຈ້ງຈົນເຫລື້ອມຕາ. ພຣະເຢຊູຊົງກ່າວວ່າ "ເພາະຖ້າແຍກຈາກເຮົາແລ້ວພວກທ່ານບໍ່ອາດເຮັດສິ່ງໃດໄດ້" (ຢຮ 15:5)

ຄໍາຖາມ:

1. ທ່ານເຄີຍອ້ອນວອນວາງມືໃສ່ຄົນເຈັບປ່ວຍບໍ່? ຫລັງຈາກອ້ອນວອນທັງຜູ້ປ່ວຍແລະທ່ານເອງຮູ້ສຶກແນວໃດ?

2. ດ້ວຍເຫດໃດຄົນປ່ວຍຈຶ່ງບໍ່ຫາຍປົກກະຕິເມື່ອທ່ານວາງມືໃສ່ເພິ່ນ?

3. ເຣື່ອງຄວາມສຸກທີ່ພຣະເຢຊູຄຣິດໄດ້ສອນມີສິ່ງໃດທີ່ທ່ານເຮັດແລ້ວ? ແລະມີສິ່ງໃດບໍ່ທັນເຮັດແຕ່ຈະພະຍາຍາມເຮັດຕາມຄໍາສອນພຣະອົງ?

4. ໃນເວລານີ້ທ່ານເປັນເກືອແລະເປັນແສງສວ່າງແນວໃດ? ຫາກຍັງບໍ່ທັນເປັນເກືອແລະເປັນແສງສວ່າງມື້ໃດຈະເປັນ? ແລະຈະເປັນໄດ້ແນວໃດ?

5. ຊັກຊວນນັກຮຽນຖວາຍຕົວເປັນເກືອແລະເປັນແສງສວ່າງໂດຍຄຣູນໍາພາການອ້ອນວອນຂໍຖວາຍຕົວໂດຍໃຫ້ນັກຮຽນອ້ອນວອນຕາມຄຣູ.

<u>ຄຳແນະນຳຄູສອນ</u>

<u>ພຣະອົງເປັນໃຜ?</u>

<u>ບົດຮຽນທີ່ 3</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ມັດທາຍ 4:23--5:16

<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ມັດທາຍ 4:23--7:28

<u>ຈຸດສຳຄັນຂອງບົດຮຽນນີ້:</u> ເພື່ອບອກໃຫ້ຮູ້ວ່າພຣະເຢຊູຄຣິດໄດ້ສອນໃຫ້ເຮົາທັງຫລາຍຕາມແບບຢ່າງຂອງພຣະອົງ.

<u>ຄຳຖາມເພື່ອການສຳຣວດ:</u> ພຣະປະສົງຂອງພຣະເຈົ້າໃຫ້ຂ້າພະເຈົ້າຢູ່ຢ່າງໃດ?

<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອໃຫ້ເຮົາທັງຫລາຍໄດ້ສຳຣວດຕົນເອງທຽບກັບພຣະທັມທີ່ພຣະອົງສອນ.

<u>ແຜ ສຳລັບກາ ສອ</u>

1. ທ່ານວ່າຂ້າພະເຈົ້າແມ່ນໃຜ? ໃຫ້ນັກຮຽນຕອບຈັກສອງຫລືສາມຄົນ. ຄຳຕອບນັກຮຽນຈະມີຄວາມແຕກຕ່າງກັນຂຶ້ນກັບວ່ານັກຮຽນເບິ່ງເຮົາໃນຮູບໃດ, **<u>ຕົວຢ່າງ:</u>** ຢູ່ບ່ອນເຮັດວຽກຂອງເຮົາທາງໂຮງງານຈະຮ້ອງເຮົາແນວນຶ່ງ, ບ້ານເຮົາເອງຄອບຄົວຂອງເຮົາຈະຮ້ອງເຮົາອີກຊື່ນຶ່ງ, ທີ່ໂບດສະມາຊິກໂບດອາດຮ້ອງເຮົາວ່າຄຣູສອນພຣະຄັມພີ, ຫລືບາງຄົນຈະຮ້ອງເຮົາວ່າຄະນະເຖົ້າແກ່, ຄະນະກັມມະການໂບດ. ສລຸບແລ້ວແມ່ນຂຶ້ນກັບວ່າ ຜູ້ເບິ່ງນັ້ນເບິ່ງເຮົາໃນແງ່ໃດ? ເວລາໃດ? ແລະຢູ່ໃສ?.

2. ຂໍໃຫ້ນັກຮຽນຜູ້ນຶ່ງອ່ານລູກາ 9:18-19. ຂຽນຄຳຖາມພຣະເຢຊູຖາມສາວົກວ່າ " **ປະຊາຊົນເວົ້າກັນວ່າເຮົາແມ່ນຜູ້ໃດ** ". ເປັນຂໍ້ໃຫຍ່ຂໍ້ທີນຶ່ງ. ກ່ອນຈະສົນທະນາກັນຕໍ່ໄປໃຫ້ຄຣູນຳພາການອ້ອນວອນເປີດ.

3. ດ້ານລຸ່ມຫົວຂໍ້ທີນຶ່ງໃຫ້ຂຽນດັ່ງນີ້: (ປະຊາຊົນເຂົ້າໃຈວ່າພຣະເຢຊູແມ່ນ).

    ກ. ໂຢຮັນ ບັບຕິສະໂຕ

    ຂ. ເອລີຢາ

    ຄ. ຜູ້ປະກາດພຣະທັມແຕ່ກ່ອນກັບຊາດ. (ແປວ່າຕາຍແຕ່ນານແລ້ວມາເກີດອີກ)

   ບອກນັກຮຽນເຂົ້າໃຈວ່າ ນີ້ແມ່ນຄຳເຫັນຂອງປະຊາຊົນທີ່ເຫັນພຣະເຢຊູ, ຄຣູຈະອະທິບາຍຄົນທັງສາມຄົນ ກ.ຂ.ຄ ທີ່ປະຊົນເຂົ້າໃຈນັ້ນໃຫ້ນັກຮຽນຟັງ. (ເພື່ອຊ່ວຍໃຫ້ເຂົ້າໃຈເຣື່ອງເອລີຢາ ໃຫ້ອ່ານປະຫວັດກະສັດທີນຶ່ງບົດ 17).

4. ຂໍໃຫ້ຜູ້ນຶ່ງອ່ານ ລູກາ 9: 20. ຄ້ານລຸ່ມຕໍ່ມາໃຫ້ຂຽນ (ສາວົກເຂົ້າໃຈວ່າພຣະເຢຊູແມ່ນ)

ກ. ພຣະຄຣິດ

ຂ. ມາແຕ່ພຣະເຈົ້າ.

ເປໂຕຕອບພຣະເຢຊູວ່າ " ແມ່ນພຣະຄຣິດ ມາແຕ່ພຣະເຈົ້າ " ຊຶ່ງເປໂຕໜາຍຄວາມວ່າພຣະຄຣິດແມ່ນພຣະອົງທີ່ພວກຜູ້ທຳນວາຍໃນສມັຍກ່ອນໄດ້ທຳນວາຍໄວ້ກ່ອນເປັນພາສາເຮັບເຣີອອກຊື່ວ່າ **ເມຊີອາ** ເພາະໃນເວລານັ້ນພາສາເຮັບເຣີເປັນພາສາຂອງພຣະຄັມພີແລະເປັນພາສາຂອງພວກຜູ້ທຳນວາຍ. ສມັຍຕໍ່ມາພວກບັນພະບຸຣຸດກໍໃຊ້ພາສາກຣີກ ດັ່ງນັ້ນຈາກ **ເມຊີອາ** ມາເປັນ **ຄຣິສໂຕ** ແລະໃນສມັຍນີ້ພາສາໄດ້ປ່ຽນຈາກ **ຄຣິສໂຕ** ມາເປັນ **ພຣະຄຣິດ** ແລະພຣະຄຣິດ ເປັນນາມມະຍົດຂອງພຣະເຢຊູ ເຮົາຈຶ່ງຮ້ອງວ່າ **ພຣະເຢຊູຄຣິດ** ແປວ່າ ພຣະເຢຊູພຣະຜູ້ໂຜດໃຫ້ພົ້ນ. ຮວມທັງ ກ ແລະ ຂ ຂ້າງເທິງແປວ່າ ພຣະເຈົ້າສົ່ງພຣະຜູ້ໂຜດໃຫ້ພົ້ນມາໂຜດໂລກ.

<u>ໝາຍເຫດ:</u> ຢ່າເຂົ້າໃຈຜິດວ່າ ຄຣິດ ແມ່ນນາມສະກຸນຂອງພຣະເຢຊູ

5. ຂໍໃຫ້ຜູ້ນຶ່ງອ່ານ (ລູກາ 9:20-22) ຄຣູຂຽນຫົວຂໍ້ໃຫຍ່ເປັນຂໍ້ທີສອງ (ຊົງຫ້າມບໍ່ໃຫ້ບອກຜູ້ອື່ນ)

ເຫດຜົນການຊົງຫ້າມບໍ່ໃຫ້ບອກຜູ້ອື່ນມີດັ່ງນີ້:

ກ. ພວກປະໂລຫິດ, ພວກນັກທັມ ແລະພວກເຖົ້າແກ່ບໍ່ຍອມຮັບພຣະເຢຊູ. (ໂລກປັດຈຸບັນຍັງບໍ່ຮັບຢູ່)

ຂ. ຢ້ານເປັນອັນຕລາຍກ່ອນກຳນົດເວລາ.

ຄ. ບໍ່ທັນເຖິງເວລາບອກເທື່ອ.

6. ຂໍໃຫ້ຜູ້ນຶ່ງອ່ານ (ລູກາ 9:23-27) ຄຣູຂຽນຫົວຂໍ້ໃຫຍ່ເປັນຂໍ້ທີສາມ (ຊົງເອີ້ນໃຫ້ຕິດຕາມ)

ກ. ຕັດສິດຂອງຕົນເສັຽ. ໝາຍຄວາມວ່າເອົາຊະນະຕົນເອງ, ຢຸດຕິສິ່ງທີ່ຕົນເອງຢາກເຮັດຢາກທຳແລ້ວຍອມຖວາຍຕົວໃຫ້ກັບພຣະອົງ. ການຖວາຍຕົວເປັນຂອງພຣະອົງຈະບໍ່ເປັນຕົນເອງອີກຕໍ່ໄປ.

ຂ. ແບກໄມ້ກາງຂອງຕົນທຸກວັນ. ທຸກຄົນຮູ້ດີວ່າພຣະເຢຊູຕາຍທີ່ໄມ້ກາງແຂນ ຊຶ່ງໝາຍຄວາມວ່າເຮັດກິຈການທີ່ພຣະອົງຊົງເຮັດທຸກວັນ ແລະພ້ອມທີ່ຈະຕາຍຄືພຣະອົງຕາຍທີ່ໄມ້ກາງແຂນ.

ຄ. ຜູ້ຢາກຊ່ອຍຊີວິດໃຫ້ພົ້ນ ຜູ້ນັ້ນຈະເສັຽຊີວິດ. ແປວ່າ ຜູ້ໃດຢ້ານໃນການຕາຍທີ່ໄມ້ກາງແຂນ ຫລືຕາຍໃນພຣະເຢຊູຄຣິດ ຫລືບໍ່ຍອມກັບໃຈເຊື່ອພຣະເຢຊູຄຣິດ ຜູ້ນັ້ນຈະເສັຽຊີວິດນິຣັນໃນຟ້າສວັນ.

ງ. ຜູ້ໃດຈະເສັຽຊີວິດເພາະເຮົາ ຜູ້ນັ້ນກໍຈະມີຊີວິດພົ້ນ. ຜູ້ຍອມຕາຍໃນເວລານີ້ຫລືຜູ້ທີ່ຍອມຖອດຖິ້ມຊີວິດເກົ່າໃນເວລານີ້ ຫລືເຊື່ອພຣະເຢຊູໃນເວລານີ້ ຜູ້ນັ້ນກໍຈະໄດ້ຊີວິດໃນຟ້າສວັນ.

<u>ຄຳຖາມ</u>

1. ທ່ານເຂົ້າໃຈວ່າພຣະເຢຊູແມ່ນໃຜ?

2. ທ່ານຢາກໄດ້ຊີວິດນິຣັນດອນໃນຟ້າສວັນບໍ່

2. ທ່ານຍິນດີຕິດຕາມພຣະອົງເລີ້ມແຕ່ວັນນີ້ບໍ່? ຄຣູອ້ອນວອນໃຫ້ທຸກຄົນທີ່ຍອມຮັບພຣະເຢຊູໃນວັນນີ້.

# ຄຳແນະນຳຄຣູສອນ
# ເຊື່ອຄັກແລ້ວບໍ່
# ບົດຮຽນບົດທີ່ 4

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ໂຢຮັນ 20:11-18,26-31
ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ໂຢຮັນ ບົດ20
ຈຸດສຳຄັນຂອງບົດຮຽນນີ້: ເພື່ອບອກໃຫ້ຮູ້ວ່າການອັສຈັນທີ່ພຣະອົງຊົງເຮັດພິສູດໃຫ້ເຮົາຮູ້ວ່າພຣະອົງເປັນພຣະເຈົ້າ.
ຄຳຖາມເພື່ອການສຳຣວດ: ທ່ານຄິດວ່າແມ່ນຫຍັງພາໃຫ້ຄົນຜູ້ນຶ່ງເຊື່ອໃນພຣະເຢຊູຄຣິດແລະເຊື່ອຢ່າງຈິງໃຈ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຊ່ອຍໃຫ້ເຮົາທັງຫລາຍມີຄວາມແນ່ໃຈໃນຄວາມເຊື່ອຂອງເຮົາ ເມື່ອເຮົາເຫັນການອັສຈັນທີ່ພຣະອົງຊົງເຮັດ.

ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ

- ຊ່ອຍເຫລືອເບິ່ງແຍງທຸກຄົນທີ່ຢູ່ໃນຄວາມຂັດສົນ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການຕິດຕໍ່ຄົນທັງປວງ.

## ແຜນການສຳລັບການສອນ

1. ຂໍໃຫ້ນັກຮຽນຈັກສອງສາມຄົນແບ່ງປັນເຣື່ອງມາເຊື່ອພຣະເຈົ້າແນວໃດ? ດ້ວຍເຫດໃດຈຶ່ງເຊື່ອ?

2. ຫລັງຈາກສອງສາມຄົນໃຫ້ຄຳພະຍານເຣື່ອງມາເຊື່ອແລ້ວ ຄຣູຈະບອກນັກຮຽນວ່າພວກເຮົາທັງຫລາຍພາກັນເຊື່ອໃນສິ່ງທີ່ເຮົາຫລາຍບໍ່ເຫັນເຫມືອນພວກສາວົກໃນສມັຍນັ້ນເຫັນ, ແຕ່ເຮົາທັງຫລາຍມີພິຍານຫລັກຖານຈາກການບັນທຶກໃນພຣະຄັມພີແລະຈາກການພິສູດຂອງໂທມາ (ໂຢຮັນ 20:30-31).

3. ແບ່ງນັກຮຽນເປັນສອງຈຸ ແລະໃຫ້ເວລາປະມານ 10 ຫລື 15 ນາທີ.
   1. ຈຸທີນຶ່ງໃຫ້ອ່ານ (ໂຢຮັນ 20:11-18) ແລະຄົ້ນຫາເຣື່ອງຂອງນາງມາຣີອາໃນບົດຮຽນ.
      ເອົາຄຳຖາມດັ່ງນີ້ໃຫ້ຈຸທີນຶ່ງ:
      - ເປັນຫຍັງມາຣີອາຈຶ່ງເຊື່ອຍາກແທ້?
      - ພຣະເຢຊູໄດ້ຊ່ອຍໃຫ້ນາງມີຄວາມເຊື່ອແນວໃດ?
      - ຫລັງຈາກນາງເຊື່ອແລ້ວນາງວ່າແນວໃດ?
      - ທ່ານເດ ແຕກຕ່າງກັບນາງບ່ອນໃດ?

2. ຈຸທີສອງໃຫ້ອ່ານ (ໂຢຮັນ 20: 16-29) ແລະຄົ້ນຄວ້າເຣື່ອງຂອງໂທມາໃນບົດຮຽນ.
<u>ເອົາຄຳຖາມດັ່ງນີ້ໃຫ້ຈຸທີສອງ:</u>

- ເປັນຫຍັງໂທມາຈຶ່ງເຊື່ອຍາກແທ້?
- ພຣະເຢຊູໄດ້ຊ່ອຍໂທມາໃຫ້ມີຄວາມເຊື່ອແນວໃດ?
- ຫລັງຈາກໂທມາພິສູດແລ້ວໂທມາວ່າແນວໃດ?
- ທ່ານເດ ແຕກຕ່າງກັບໂທມາບໍ່, ບ່ອນໃດ?

3. ໃຫ້ຈຸທີນຶ່ງລາຍງານຈັກ 5 ນາທີ. ຕອບຄຳຖາມທີ່ມອບໃຫ້.
<u>ຄຣູອາຈຖາມຈຸທີນຶ່ງວ່າ</u>
1. ເປັນຫຍັງນາງມາຣີອາຈຶ່ງຮ້ອງໃຫ້?
2. ນາງມາຣີອາບໍ່ຈື່ສຽງພຣະເຢຊູບໍ່ ນາງຈຶ່ງຄິດວ່າເປັນຄົນເຝົ້າສວນ?.
3. ພວກທ່ານຄິດວ່າເປັນຫຍັງ ພຣະເຢຊູຈຶ່ງປາກົດຕົວຕໍ່ມາຣີອາກ່ອນປາກົດຕົວຕໍ່ສາວົກ?

4. ໃຫ້ຈຸທີສອງລາຍງານຈັກ 5 ນາທີ. ຕອບຄຳຖາມທີ່ມອບໃຫ້.
<u>ຄຣູອາດຖາມຈຸທີສອງວ່າ</u>
1. ເປັນຫຍັງພຣະເຢຊູຈຶ່ງປາກົດຕົວໃຫ້ໂທມາພິສູດຄວາມຈິງ?
2. ການພິສູດຂອງໂທມາມີຄວາມສຳຄັນຕໍ່ພຣະເຢຊູບໍ່?
3. ການພິສູດຂອງໂທມາສຳຄັນຕໍ່ພວກເຮົາບໍ່?
4. ສຳຄັນແນວໃດ? ຫລື ເປັນຫຍັງບໍ່ສຳຄັນ?

5. ອ່ານໂຢຮັນ 20:30-31. ສິ່ງທີ່ບັນທຶກໃນພຣະຄັມພີເປັນຫລັກຖານຄວາມຈິງທີ່ເກີດຂຶ້ນເຫມືອນດັ່ງບັນທຶກເຣື່ອງລາວຕ່າງໆໃນໂລກວ່າເປັນຄວາມຈິງ ຫາກເຮົາປະຕິເສດການບັນທຶກຂອງຄວາມເປັນມາຂອງພຣະຄັມພີແລ້ວກໍເທົ່າກັບວ່າເຮົາປະຕິເສດການບັນທຶກວັນເດືອນປີເກີດຂອງເຮົາເອງເພາະໃນຕອນທີ່ເຮົາເກີດມານັ້ນເຮົາເອງບໍ່ທັນຮູ້ຫຍັງເທື່ອ ມີແຕ່ພໍ່ແມ່ໄດ້ເຮັດຫນັງສືບັນທຶກວັນເດືອນປີເກີດຂອງເຮົາໄວ້ເພາະສນັ້ນເຮົາຈຶ່ງຮູ້ຈັກວັນເດືອນປີເກີດຂອງເຮົາເອງ. ເຣື່ອງຂອງພຣະຄັມພີກໍຍິ່ງມີຫລາຍຄົນບັນທຶກໄວ້ເພື່ອເຮົາທັງຫລາຍຈະໄດ້ເຊື່ອແລະມີຊີວິດຢູ່ໃນພຣະນາມແຫ່ງພຣະເຢຊູ.

6. ຄຣູນຳພາການອ້ອນວອນປິດແລະຂອບພຣະຄຸນທີ່ໄດ້ເຊື່ອຢ່າງຕາບໍ່ເຫັນ, ແຕ່ເຫັນຫລັກຖານພິຍານ. ອ້ອນວອນຂອບພຣະຄຸນສຳລັບນາງມາຣີອາມີຄວາມຮັກອັນໃຫຍ່ ຂໍໃຫ້ເຮົາເປັນຄືນາງມາຣີອາ, ອ້ອນວອນຂອບພຣະຄຸນສຳລັບໂທມາທີ່ໄດ້ພິສູດຄວາມຈິງເພື່ອເຮົາ ຂໍໃຫ້ເຮົາມີໃຈກ້າເຫມືອນໂທມາເທີ້ນ.

## <u>ຄຳແນະນຳສຳລັບຄຣູສອນ</u>
## <u>ບົດຮຽນທີ 5</u>
## <u>ມີສ່ວນໃນການຮັບໃຊ້ຂອງພຣະຄຣິດ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ກິຈການ 1:1-9; 2:43-47

<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> ກິຈການ 1--2

<u>ຈຸດສຳຄັນຂອງບົດຮຽນນີ້:</u> ເພາະພຣະວິນຍານບໍຣິສຸດຊົງປະທານຣິດອຳນາດໃຫ້ພວກເຮົາໃນການເປັນພະຍານໃຫ້ກັບພຣະຄຣິດທາງຄວາມເວົ້າແລະການກະທຳ, ພວກເຮົາກໍມີສ່ວນໃນການຮັບໃຊ້ຂອງພຣະອົງຕໍ່ໄປ.

<u>ຄຳຖາມເພື່ອການສຳຣວດ:</u> ການຮັບໃຊ້ຂອງພຣະເຢຊູຈະດຳເນີນຕໍ່ໄປໃນທຸກວັນນີ້ດ້ວຍວິທີໃດແດ່?

<u>ຈຸດປະສົງຂອງບົດຮຽນນີ້:</u> ຕັດສິນໃຈທີ່ຈະໃຫ້ຣິດອຳນາດຂອງພຣະວິນຍານນຳພາເຣື່ອງການເປັນພະຍານໃຫ້ກັບພຣະເຢຊູໃນດ້ານການເວົ້າແລະການກະທຳຂອງຂ້ອຍ.

### <u>ແຜນສຳລັບການສອນ</u>

<u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u> (ໃຊ້ເວລາ 5 ນາທີ)

1. ຊັກຊວນໃຫ້ພວກນັກຮຽນໄດ້ຄຶດເຖິງຄັ້ງນຶ່ງໃນຊີວິດທີ່ເຂົາເຈົ້າທີ່ໄດ້ຖືກມອບໝາຍວຽກງານໃຫ້ແຕ່ຮູ້ຕົວເອງວ່າຈະບໍ່ສາມາດເຮັດໄດ້. ໃຫ້ນັກຮຽນຄົນນຶ່ງເລົ່າເຣື່ອງຄວາມຮູ້ສຶກໃນຕອນນັ້ນໃຫ້ເພື່ອນນັກຮຽນຟັງ. ຫລັງຈາກຟັງ ເຣື່ອງຈົບແລ້ວບອກທຸກຄົນວ່າ ບົດຮຽນພາກຕໍ່ໄປນີ້ຈະເວົ້າເຖິງເຣື່ອງພຣະເຢຊູໄດ້ມອບວຽກການປະກາດຂ່າວ ປະເສີດຂອງພຣະອົງໃຫ້ພວກອັຄສາວົກເຮັດ. ພວກເຂົາທັງຫລາຍກໍຄົງຈະຄຶດວ່າພວກຕົນບໍ່ອາດສາມາດທີ່ຈະ ເຮັດວຽກອັນຍິ່ງໃຫຍ່ນັ້ນໄດ້. ບອກນັກຮຽນວ່າມື້ນີ້ພວກເຂົາເຈົ້າຈະໄດ້ຮຽນຮູ້ວ່າພວກອັຄສາວົກສາມາດເຮັດ ໄດ້ຫລືບໍ່.

<u>ນຳພາການສຶກສາພຣະທັມ</u> (ໃຊ້ເວລາ 30 ນາທີ)

2. ໃຫ້ນັກຮຽນຄົນນຶ່ງອ່ານ ລູກາ 24:49-51; ແລະໃຫ້ອີກຄົນນຶ່ງອ່ານ ກິຈການ 1:1-2. ຂໍໃຫ້ຜູ້ຟັງສັງເກດວ່າພຣະທັມທັງສອງຕອນນີ້ເວົ້າເຣື່ອງຫຍັງແດ່ທີ່ຄ້າຍຄືກັນ (ການສະເດັດສູ່ສວັນ). ບອກນັກຮຽນວ່າພຣະກິຕິຄຸນທັງສີ່ຫົວໄດ້ບັນທຶກເຣື່ອງການທຳງານຮັບໃຊ້ຂອງພຣະເຢຊູຄຣິດຈົນເຖິງການສະເດັດກັບສູ່ສວັນຂອງພຣະອົງ; ພຣະທັມກິຈການຄືປະວັດສາດຂອງການກະທຳຕ່າງໆຫລັງຈາກພຣະເຢຊູຊົງສະເດັດກັບສູ່ສວັນ. ການສະເດັດກັບສູ່ສວັນບໍ່ໄດ້ແມ່ນຈຸດຈົບຂອງການຮັບໃຊ້ແຕ່ເປັນຈຸດເລີ່ມຕົ້ນຂອງການທຳງານຜ່ານພຣະວິນຍານບໍຣິສຸດ.

3. ໃຫ້ນັກຮຽນຄົນນຶ່ງອ່ານ ລູກາ 1:1-4; ແລະໃຫ້ອີກຄົນນຶ່ງອ່ານ ກິຈການ 1:1-2 ອີກຄັ້ງນຶ່ງ. ບອກໃຫ້ທຸກຄົນຮູ້ວ່າພຣະທັມທັງສອງຕອນໄດ້ອອກຊື່ ເທໂອຟີໂລ ຊຶ່ງເປັນຄົນໆດຽວກັນ; ສິ່ງເຫລົ່ານີ້ສະແດງໃຫ້ເຮົາເຫັນວ່າພຣະທັມລູກາ ແລະພຣະທັມກິຈການມີສ່ວນພົວພັນກັນ. ຄວາມຈິງແລ້ວພຣະທັມລູກາເວົ້າເຖິງ "ສິ່ງທີ່ພຣະເຢຊູໄດ້ເລີ້ມກະທຳແລະໄດ້ສອນ" ແລະພຣະທັມກິຈການໄດ້ເວົ້າເຖິງການຮັບໃຊ້ຂອງພຣະເຢຊູຄຣິດໃນຄຣິສຕະຈັກສມັຍແລກ.

4. ຂຽນຫົວຂໍ້ດັ່ງຕໍ່ໄປນີ້ໃສ່ກະດານ:
   ກ. ໃຫ້ພະລັງໃນການທຳງານຕໍ່ໄປ (ກກ 1:1-11)
   ຂ. ການເປັນຢູ່ຮ່ວມກັນ (ກກ 2:43-47)

5. ໃຫ້ນັກຮຽນຄົນນຶ່ງອ່ານ ກິຈການ 1:1-11. ອະທິບາຍພຣະທັມໃນຫົວຂໍ້ "ໃຫ້ພະລັງໃນການທຳງານຕໍ່ໄປ" ໂດຍໃຊ້ຄຳອະທິບາຍໃນບົດຮຽນ. ຖາມທຸກຄົນວ່າ: (1) ເປັນຫຍັງພວກສາວົກຈຳເປັນຕ້ອງໄດ້ລໍຖ້າ?; (2) ການລໍຖ້າມີຄວາມສຳຄັນແນວໃດ?

6. ສົນທະນາເຣື່ອງພຣະມະຫາບັນຊາແລະການສະເດັດກັບສູ່ສວັນ. ພິຈາຣະນາເບິ່ງການເຂົ້າໃຈຜິດຂອງພວກສາວົກກ່ຽວກັບ "ພຣະຣາຊະອານາຈັກຂອງພຣະເຈົ້າ. ອະທິບາຍຄວາມໝາຍຂອງຂໍ້ 1:8. ຖາມນັກຮຽນວ່າ:
   - ກຸງເຢຣູຊາເລັມ ຂອງທ່ານຢູ່ໃສ? (ບ່ອນທີ່ທ່ານກຳລັງຢູ່)
   - ແຂວງຢູດາຍ ຂອງທ່ານຢູ່ໃສ? (ຄຸ້ມບ້ານເມືອງຂອງທ່ານ)
   - ແຂວງຊາມາເຣັຽ ຂອງທ່ານຢູ່ໃສ? (ຄົນທີ່ບໍ່ແມ່ນເຊື້ອຊາດດຽວກັບທ່ານ)
   - ທີ່ສຸດປາຍແຜ່ນດິນໂລກ ຂອງທ່ານຢູ່ໃສ? (ທົ່ວໂລກ)
   - ພຣະມະຫາບັນຊາບອກໃຫ້ພວກເຮົາເຮັດຫຍັງ? (ອອກໄປປະກາດຂ່າວປະເສີດ)
   - ພຣະເຢຊູໄດ້ຍົກເວັ້ນຜູ້ໃດແດ່? (ບໍ່ມີຜູ້ໃດໄດ້ຮັບການຍົກເວັ້ນ)

7. ການເປັນພະຍານຂອງພວກສາວົກເລີ້ມຂຶ້ນຫລັງຈາກພຣະທັມກິຈການ 1:8 ສຳເຣັດລົງ. ພວກເຮົາໃນສມັຍນີ້ຈະເວົ້າວ່າ "ຂ້ອຍຍັງປະກາດບໍ່ໄດ້ເພາະຂ້ອຍລໍຖ້າພຣະວິນຍານ" ໄດ້ຫລືບໍ່?

8. ອ່ານ ກິຈການ 1:10-2:42 ເພື່ອທຸກຄົນຈະເຫັນຄວາມຊື່ສັດຂອງພຣະເຈົ້າ.

9. ອ່ານ ກິຈການ 2:43-47. ອະທິບາຍ "ການເປັນຢູ່ຮ່ວມກັນ" ໂດຍໃຊ້ການບັລຍາຍໃນບົດຮຽນ. ໃຫ້ນັກຮຽນສັງເກດເບິ່ງສະພາບຂອງຄຣິສຕະຈັກໃນສມັຍແລກ ວ່າມີຫຍັງເກີດຂຶ້ນແດ່ (ການອັສຈັນ, ການສາມະຄີທັມ, ການແບ່ງປັນສິ່ງຂອງ, ການປະຊຸມ, ການເຕີບໃຫຍ່, ແລະຕໍ່ໆໄປ). ຊັກຊວນໃຫ້ທຸກຄົນປຽບທຽບກັບຄຣິສຕະຈັກຂອງເຂົາ ເຈົ້າວ່າມີຫຍັງຄ້າຍຄືກັນບໍ່?

<u>ນຳບົດຮຽນໄປໃຊ້ໃນຊີວິດ</u> (ໃຊ້ເວລາ 15 ນາທີ)

10. ນຳພາການສົນທະນາໂດຍການໃຊ້ຄຳຖາມໃນພາກສຸດທ້າຍຂອງບົດຮຽນ.

11. ຖາມທຸກຄົນວ່າເຂົາເຈົ້າຍັງຕ້ອງການຫຍັງອີກແດ່ ກ່ອນຈະເລີ້ມເຮັດພຣະມະຫາບັນຊາໃຫ້ສຳເຣັດ.
    ອະທິຖານປິດ.

# <u>ຄຳແນະນຳສຳລັບຄຣູສອນ</u>
# <u>ບົດຮຽນທີ 6</u>
# <u>ເລົ່າເຣື່ອງຂອງພຣະເຢຊູ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ກິຈການ 10:34-48
<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> ກິຈການ 10
<u>ຈຸດສຳຄັນຂອງບົດຮຽນນີ້:</u> ພວກເຮົາຈະຕ້ອງແບ່ງປັນຂ່າວປະເສີດເຣື່ອງພຣະເຢຊູໃຫ້ກັບທຸກຄົນ, ເຊີນເຂົາເຈົ້າໃຫ້ຮັບເອົາພຣະອົງດ້ວຍຄວາມເຊື່ອ.

<u>ຄຳຖາມເພື່ອການສຳຣວດ:</u> ຂ່າວປະເສີດແມ່ນຫຍັງ, ແລະມີໄວ້ເພື່ອໃຜ?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອຫາວິທີທີ່ຈະແບ່ງປັນຂ່າວປະເສີດດ້ວຍຄວາມຫ່ວງໃຍ.

## <u>ແຜນສຳລັບການສອນ</u>

## <u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u> (ໃຊ້ເວລາ 5 ນາທີ)

1. ຕັ້ງຄຳຖາມນີ້ເພື່ອໃຫ້ຄົນຄິດ: ຖ້າມີຄົນທີ່ບໍ່ຮູ້ພຣະເຈົ້າຄົນນຶ່ງຍ່າງເຂົ້າມາໃນຫ້ອງນີ້, ມີໃຜແດ່ທີ່ຈະພຍາຍາມເປັນພະຍານເຣື່ອງພຣະເຈົ້າກັບເຂົາ? ຖ້າມີຄົນທີ່ມາຈາກຫລາຍເຊື້ອຊາດຍ່າງເຂົ້າມາໃນຫ້ອງນີ້, ຄົນມາຈາກເຊື້ອຊາດໃດຈະໄດ້ຮັບຄວາມສົນໃຈຫລາຍກວ່າຄົນອື່ນໆ?

2. ບອກນັກຮຽນອີກເທື່ອນຶ່ງວ່າ ພຣະທັມກິຈການເປັນຄຳບັນທຶກຂອງທ່ານລູກາກ່ຽວກັບການຂຍາຍຕົວຂອງຄຣິສຕະສາສນາ. ກິຈການ 10 ເປັນຈຸດເລີ້ມຂອງການປະກາດກັບຄົນຕ່າງຊາດ. ໃຫ້ນັກຮຽນຄົນນຶ່ງອ່ານ 10:1-2. ໃຫ້ຂໍ້ສັງເກດວ່າ ໂກເນລີໂອ ແມ່ນໃຜ (ເບິ່ງບົດຮຽນ).

## <u>ນຳພາການສຶກສາພຣະທັມ</u> (ໃຊ້ເວລາ 30 ນາທີ)

3. ເບິ່ງພຣະທັມ ຂໍ້ 10:1-16 ແລ້ວໃຊ້ຄຳບັລຍາຍໃນບົດຮຽນໃນຫົວເຣື່ອງ "ສິ່ງສະອາດແລະສິ່ງທີ່ບໍ່ທັນຊຳຣະໃຫ້ສະອາດ" ເພື່ອຊ່ວຍໃນການສົນທະນາວ່າສິ່ງໃດ ສະອາດ ແລະສິ່ງໃດ ບໍ່ສະອາດ. ຕັ້ງຄຳຖາມ:
   - ເຣື່ອງສິ່ງ ສະອາດ ແລະສິ່ງບໍ່ສະອາດ ກ່ຽວຂ້ອງກັບພວກເຮົາແນວໃດແດ່ໃນສມັຍນີ້?
   - ພວກເຮົາມີຫຍັງເປັນເຄື່ອງວັດແທກວ່າ "ຄົນພວກນີ້ໃຊ້ໄດ້" ແລະ "ຄົນພວກນັ້ນໃຊ້ບໍ່ໄດ້?"

4. ໃຊ້ຄຳອະທິຍາຍໃນຫົວຂໍ້ "ເຮັດໄປຕາມຄວາມເຂົ້າໃຈ" ເພື່ອອະທິບາຍຄວາມແຕກຕ່າງລະຫວ່າງເປໂຕແລະໂກເນ

ລີໂອ ຫລັງຈາກແຕ່ລະຄົນໄດ້ເຫັນພຣະນິມິດ. ໃຊ້ຄຳຖາມຂໍ້ສອງໃນທ້າຍບົດຮຽນເພື່ອປະກອບການສົນທະນາ.

5. ເຕືອນທຸກຄົນວ່າ ລະຍະທາງໃນແຜນທີ່ ບໍ່ໄດ້ເປັນອຸປສັກສຳລັບພຣະເຈົ້າ. ພຣະເຈົ້າສາມາດທຳງານກັບຫລາຍໆຄົນໄດ້ໃນເວລາດຽວກັນ. ໃຊ້ຄຳຖາມຂໍ້ນຶ່ງໃນທ້າຍບົດຮຽນເພື່ອຊ່ວຍການສົນທະນາ.

6. ອ່ານ 10:25-26, ຊັກຊວນໃຫ້ນັກຮຽນສັງເກດເບິ່ງຄວາມຖ່ອມຕົວຂອງບຸກຄົນທັງສອງເວລາເຂົາເຈົ້າພົບກັນຄັ້ງແລກ. ຖາມທຸກຄົນວ່າ, ການຖ່ອມຕົວຈະຊ່ວຍຄວາມສັມພັນແລະຄວາມຍຸ້ງຍາກໃນຄຣິສຕະຈັກທຸກມື້ນີ້ໄດ້ແນວໃດແດ່?

7. ອ່ານ 10:34-48. ຖາມ: ເຣື່ອງຂອງພຣະເຢຊູແມ່ນຫຍັງ? ສິ່ງທີ່ເກີດຂຶ້ນໃນຕອນນີ້ປ່ຽນແປງຄຣິສຕະສາສນາແນວໃດແດ່? ຖ້າສິ່ງເຫລົ່ານີ້ບໍ່ໄດ້ເກີດຂື້ນ, ພວກເຮົາຈະມີໂອກາດໄດ້ຍິນເຣື່ອງຂ່າວປະເສີດບໍ່?

8. ໃຫ້ຄົນນຶ່ງອ່ານ 10:36-43. ຊັກຊວນໃຫ້ທຸກຄົນພິຈາຣະນາເບິ່ງຄຳເທສນາຂອງເປໂຕໃນຕອນນີ້. ໃຊ້ຄຳອະທິບາຍໃນຫົວຂໍ້ "ການປະກາດພຣະທັມຂອງພຣະເຈົ້າ" ເພື່ອຊ່ວຍໃນການອະທິບາຍ.

9. ເຕືອນທຸກຄົນວ່າ, ຫລາຍຄັ້ງພວກເຮົາຄິດວ່າຕົນເອງໄດ້ທຳງານລຳບາກຫລາຍໃນການປະກາດພຣະທັມ. ຄວາມຈິງແລ້ວພວກເຮົາໄດ້ຮຽນຮູ້ຈາກພຣະທັມກິຈການວ່າ ພຣະວິນຍານບໍຣິສຸດເປັນຜູ້ນຳຄົນໃຫ້ມາເຊື່ອ. ບົດຮຽນໃນຕອນນີ້ເຕືອນພວກເຮົາໃຫ້ເພິ່ງພຣະວິນຍານໃນການປະກາດແລະການເປັນພະຍານ. ຖ້າພວກເຮົາໃຫ້ເວລາກັບພຣະເຈົ້າ, ພຣະວິນຍານຈະເປັນຜູ້ໃຫ້ຣິດອຳນາດ.

<u>ນຳບົດຮຽນໄປໃຊ້ໃນຊີວິດ</u> (ໃຊ້ເວລາ 15 ນາທີ)

10. ອ່ານ 10:34 ໃຫ້ທຸກຄົນໄດ້ຍິນ. ບອກນັກຮຽນວ່າ, ຕາບໃດເປໂຕບໍ່ຍອມອອກຈາກພວກຄົນຢິວ, ເຂົາຈະບໍ່ມີໂອກາດໄດ້ເຂົ້າໃຈວ່າ "ຂ່າວປະເສີດມີໄວ້ສຳລັບທຸກໆຄົນ." ຍ້ອນພຣະນິມິດຂອງພຣະເຈົ້າແລະການອອກໄປຫາຄົນອື່ນໆ ເປໂຕຈຶ່ງໄດ້ຮູ້ວ່າພຣະຄຸນຂອງພຣະເຈົ້າບໍ່ໄດ້ຈຳກັດຊາດຫລືພາສາ.

11. ເປໂຕໄດ້ເຮັດຫຍັງແດ່ກ່ອນທີ່ພຣະເຈົ້າຈະສາມາດໃຊ້ເຂົາໄປເປັນພະຍານກັບໂກເນລີໂອ (ເປໂຕຍອມຟັງພຣະເຈົ້າແລະເອົາຊະນະຄວາມລັງກຽດສຽດສີຂອງຕົນ). ຊັກຊວນນັກຮຽນໃຫ້ເອົາຕົວຢ່າງຂອງເປໂຕເພື່ອພວກເຂົາຈະໄດ້ໄປປະກາດຂ່າວປະເສີດກັບທຸກຄົນທີ່ມີໃຈປະສົງຢາກຈະຮູ້ພຣະເຈົ້າ.

# <u>ຄຳແນະນຳສຳລັບຄຣູສອນ</u>
# <u>ບົດຮຽນທີ 7</u>
# <u>ຂ່າວປະເສີດສຳລັບທຸກຄົນ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ກິຈການ 15:1-21
<u>ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:</u> ກິຈການ 11:19-26; 13:44-52; 14:24-15:35
<u>ຈຸດສຳຄັນຂອງບົດຮຽນນີ້:</u> ໂດຍທາງພຣະຄຸນ ພຣະເຈົ້າຊົງປະທານຄວາມລອດພົ້ນໃຫ້ແກ່ມະນຸດເພາະຄວາມເຊື່ອ ຂອງພວກເຂົາໃນອົງພຣະຄຣິດ.

<u>ຄຳຖາມເພື່ອການສຳຣວດ:</u> ແຕ່ລະຄົນຈະລອດພົ້ນວິທີໃດ?
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອບອກໃຫ້ຮູ້ວ່າແຕ່ລະຄົນຈະໄດ້ຮັບຄວາມພົ້ນວິທີໃດ?

## <u>ແຜນສຳລັບການສອນ</u>

<u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u> (ໃຊ້ເວລາ 5 ນາທີ)

1. ເຊີນນັກຮຽນໃຫ້ເລົ່າເຣື່ອງບັນຫາບາງຢ່າງທີ່ເຂົາເຈົ້າເຄີຍໄດ້ເຫັນເກີດຂື້ນໃນຄຣິສຕະຈັກແລະເຂົາເຈົ້າກໍໄດ້ເຫັນ ຄຣິສຕະຈັກແກ້ໄຂບັນຫາເຫລົ່ານັ້ນ. ຫລັງຈາກແຕ່ລະຄົນໄດ້ເລົ່າເຣື່ອງໃຫ້ຟັງແລ້ວ, ຖາມເຂົາເຈົ້າວ່າ "ທ່ານໄດ້ ເຮັດຫຍັງແດ່ເພື່ອຊ່ວຍແກ້ໄຂບັນຫານັ້ນ?"

2. ບອກທຸກຄົນວ່າບົດຮຽນມື້ນີ້ຈະເວົ້າເຖິງບັນຫາສຳຄັນອັນນຶ່ງທີ່ເກີດຂື້ນກັບຄຣິສຕະຈັກ ແລະທຸກຄົນຈະໄດ້ເຫັນ ຄຣິສຕະຈັກຂອງພຣະເຈົ້າແກ້ໄຂບັນຫາເຫລົ່ານັ້ນຢ່າງເປັນລະບຽບ. ບັນຫາມີຢູ່ວ່າ, "ເຮັດແນວໃດຈຶ່ງຈະໄດ້ ເປັນຄຣິສຕຽນ?"

<u>ນຳພາການສຶກສາພຣະທັມ</u> (ໃຊ້ເວລາ 30 ນາທີ)

3. ເລົ່າຄວາມເປັນມາໃຫ້ທຸກຄົນເຂົ້າໃຈ ໂດຍເບິ່ງພຣະທັມກິຈການ 11:19-26; 13:44-52; 14:24-28. ຈຸດສຳຄັນມີດັ່ງນີ້:
    1. ກິຈການ 11:19-26 ບອກວ່າໄດ້ມີຄົນຕ່າງຊາດຢ່າງຫລວງຫລາຍເຂົ້າມາເຊື່ອຢູ່ທີ່ຄຣິສຕະຈັກອັນຕິໂອ ເຂັຽ. ບາຣະນາບາໄດ້ໄປນຳ ໂປໂລມາຊ່ວຍໃນການອົບຮົມພວກສາວົກ.
    2. ກິຈການ 13 ເວົ້າເຖິງການປະກາດຂອງ ບາຣະນາບາ ແລະໂປໂລ. ເພາະຊາວຢິວປະຕິເສດພຣະທັມ, ພວກເຂົາຈຶ່ງໄປປະກາດກັບຄົນຕ່າງຊາດ.
    3. ກິຈການ 14:24-28 ເວົ້າເຖິງຄົນຕ່າງຊາດມາເຊື່ອພຣະເຈົ້າເພາະການປະກາດຂອງໂປໂລ ແລະບາ ຣະນາບາ.

4. ຂຽນຫົວຂໍ້ໃຫຍ່ໃສ່ກະດານ:

 ກ. ການຜິດຖຽງກັນທີ່ເມືອງອັນຕິໂອເຂັຽ (15:1-2)

 ຂ. ການປຶກສາຫາລືທີ່ເຢຣູຊາເລັມ (15:3-21)

5. ອ່ານ 15:1-5. ຄຣິສຕະຈັກຂອງພຣະເຈົ້າໄດ້ຂຍາຍຕົວອອກຢ່າງວ່ອງໄວໄປເຖິງຄົນຕ່າງຊາດ. ພວກຜູ້ເຊື່ອທີ່ມາຈາກພວກຟາຣີຊາຍເລັ້ມສັ່ງສອນວ່າທຸກຄົນຈະຕ້ອງຮັບພິທີຕັດແລະນັບຖືບັນຍັດຂອງໂມເຊຈຶ່ງຈະມາເປັນຄຣິສຕຽນໄດ້.

6. ໃຫ້ຄົນນຶ່ງອ່ານ 15:6-11. ບອກໃຫ້ທຸກຄົນຕັ້ງໃຈຟັງຄຳປາສັຍຂອງເປໂຕ; ສັງເກດເບິ່ງຄວາມກ້າຫານຂອງເປໂຕໃນການທີ່ຈະບອກທີ່ປະຊຸມໃຫ້ຍອມຮັບພວກຄົນຕ່າງຊາດ. ເປໂຕບອກຈຸດສຳຄັນຂອງຂ່າວປະເສີດໃນຂໍ້ 15:11 ວ່າ, ທຸກຄົນ "ຈະໄດ້ພົ້ນໂດຍພຣະຄຸນ" ແລະບໍ່ມີຫຍັງແຕກຕ່າງລະຫວ່າງຊາວຢິວແລະຄົນຕ່າງຊາດ.

7. ອ່ານ 15:12-21 ໃຫ້ທຸກຄົນໄດ້ຍິນ. ຂໍໃຫ້ນັກຮຽນສັງເກດການຕັດສິນໃຈຂອງ ຢາໂກໂບ. ການຕັດສິນໃຈຂອງຢາໂກໂບເຊັ່ນນັ້ນອາດຈະເປັນເພາະ: ການອັສຈັນ, ຄວາມສຳເຣັດໃນການປະກາດກັບຄົນຕ່າງຊາດ, ແລະການປະກາດກັບຄົນຕ່າງຊາດໄດ້ຖືກຂຽນໄວ້ໃນພຣະທັມ. ຢາໂກໂບ ບອກທີ່ປະຊຸມວ່າທຸກຢ່າງໄດ້ເກີດຂຶ້ນຕາມແຜນຂອງພຣະເຈົ້າ. ເຂົາເນັ້ນໃນ 15:19 ວ່າ, "ຢ່າລົບກວນຄົນຕ່າງຊາດທີ່ກຳລັງຫລົບມາຫາພຣະເຈົ້າ." ຢາໂກໂບສນັບສນູນວຽກງານຂອງຄຣິສຕະຈັກທີ່ອັນຕິໂອເຂັຽແລະເຂົາຈະບໍ່ເພີ່ມເຕີມຫຍັງອີກກ່ຽວກັບເຣື່ອງຄວາມລອດພົ້ນ. ຢາໂກໂບສາມາດສ້າງຄວາມສັມພັນລະຫວ່າງຄຣິສຕຽນຢິວແລະຄຣິສຕຽນຊາວຕ່າງຊາດໃຫ້ດີຂຶ້ນ. ເບິ່ງຫົວຂໍ້ "ການປຶກສາຫາລືທີ່ເຢຣູຊາເລັມ" ແລະໃຊ້ຄຳອະທິບາຍເພື່ອຊ່ວຍໃນການບັລຍາຍ.

<u>ນຳບົດຮຽນໄປໃຊ້ໃນຊີວິດ</u> (ໃຊ້ເວລາ 15 ນາທີ)

8. ພານັກຮຽນສົນທະນາຄຳຖາມ 3 ຂໍ້ ຕໍ່ໄປນີ້:

 (1). ມະນຸດທຸກຄົນຈະໄດ້ຮັບຄວາມລອດພົ້ນດ້ວຍວິທີໃດ?

 (2). ພຣະທັມ 15:11 ແລະ 15:19 ມີຄວາມໝາຍສຳລັບພວກຄົນຕ່າງຊາດແລະພວກເຮົາໃນປັດຈຸບັນນີ້ແນວໃດແດ່? (ພວກເຂົາແລະພວກເຮົາໄດ້ພົ້ນໂດຍພຣະຄຸນ)

 (3). ອະທິບາຍເຣື່ອງຄວາມລອດພົ້ນໂດຍໃຊ້ຫລັກສູດນີ້, <u>ຄວາມພົ້ນ=ພຣະຄຸນ + ຄວາມເຊື່ອ</u> (ພວກເຮົາບໍ່ຈຳເປັນຕ້ອງເພີ່ມແນວອື່ນໃສ່ອີກ). ຂຽນໃສ່ກະດານໃຫ້ທຸກຄົນໄດ້ເຫັນ.

9. ປິດການສຶກສາໂດຍຕັ້ງຄຳຖາມເພື່ອຊວນຄິດດັ່ງນີ້:

 ກ. ທ່ານເຫັນຄຣິສຕະຈັກເປັນຈຸດສຳຄັນສຳລັບການປະກາດບໍ່?

 ຂ. ພວກເຮົາຈະສົ່ງເສີມເຣື່ອງການປະກາດໄດ້ແນວໃດ?

 ຄ. ທ່ານໄດ້ເຮັດຫຍັງແດ່ເພື່ອຂຍາຍການປ່າວປະກາດໃຫ້ໄປ ເຖິງທຸກໆຄົນ?

10. ອະທິຖານປິດ.

# <u>ຄຳແນະນຳສຳລັບຄຣູສອນ</u>
# <u>ບົດຮຽນທີ 8</u>
# <u>ຊີວິດໃຫມ່ໃນພຣະຄຣິດ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ໂຣມ 8:1-17, 31-39

<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ໂຣມບົດທີ 8

<u>ຈຸດສຳຄັນຂອງບົດຮຽນນີ້:</u> ເມື່ອເຮົາຢູ່ໃນພຣະຄຣິດ, ພຣະວິນຍານບໍຣິສຸດຈະໃຫ້ເຮົາມີອຳນາດໃນຄວາມສນິດສນົມກັບພຣະອົງ, ຄວາມເຊື່ອຈະຜູກມັດເຮົາ ກັບພຣະເຈົ້າກໍຄືພຣະບິດາ ແລ້ວເຮົາກໍຈະສາມາດປະເຊີນກັບບັນຫາຫຍຸ້ງຍາກຂອງຊີວິດໄດ້ຢ່າງຫມັ້ນໃຈ.

<u>ຄຳຖາມເພື່ອການສຳຫລວດ:</u> ໃນວັນນີ້, ພຣະເຢຊູຄຣິດປ່ຽນແປງຫຍັງແດ່ໃນຕົວທ່ານ?

**<u>ຈຸດ</u>**<u>ປະສົງຂອງບົດຮຽນນີ້:</u> ເພື່ອຢາກບອກໃຫ້ຮູ້ວ່າ ພຣະເຢຊູຄຣິດປ່ຽນແປງຫຍັງແດ່ໃນຊີວິດເຮົາ,ທັງພຣະພອນ ແລະ ການຮັບຜິດຊອບ.

## <u>ແຜນສຳລັບການສອນ</u>

<u>1. ແນະນຳຈຸດປະສົງ:</u>

ມື້ນີ້ ພວກເຮົາຈະໄດ້ຮຽນເຣື່ອງຊີວິດໃຫມ່ໃນພຣະຄຣິດ. ເມື່ອຄົນໆນຶ່ງ ຫາກກາຍມາເປັນຄຣິສຕຽນ ຫລືຮັບເອົາພຣະເຢຊູເຂົ້າມາເປັນເຈົ້າຂອງຊີວິດຂອງເຂົາແລ້ວ ເປົ້າຫມາຍປາຍທາງຂອງເຂົາກໍແມ່ນຕ້ອງປ່ຽນ ແລະ ຄ່ອຍໆກາຍເປັນເຫມືອນພຣະຜູ້ຊ່ວຍຂອງເຂົາ.

<u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u>

2. ກ່ອນເລີ່ມຕົ້ນບົດຮຽນ, ໃຫ້ຄຣູວາງຄຳຖາມວ່າ: ໃຫ້ອະທິບາຍຄວາມຫມາຍຂອງພຣະເຢຊູເບິ່ງ. ຫລືອີກຢ່າງນຶ່ງກໍວ່າ: ພຣະເຢຊູມີຄວາມຫມາຍຫຍັງແດ່ໃນຊີວິດຂອງເຮົາ?
   ເມື່ອວາງຄຳຖາມແລ້ວໃຫ້ຢຸດຢູ່ ປ່ອຍໂອກາດໃຫ້ນັກຮຽນຄຶດຈັກຫນ້ອຍນຶ່ງ, ແລ້ວໃຫ້ຕອບຈັກສອງສາມຄົນ.
   ໃຫ້ນັກຮຽນຄົນນຶ່ງອ່ານຄຳນຳໃນເຈັ້ຽບົດຮຽນດັ່ງງ

3. ບອກນັກຮຽນວ່າຫົວຂໍ້ບົດຮຽນນີ້ແມ່ນ ຂໍກະແຈທີ່ຈະໄດ້ອະທິບາຍຮ່ວມກັນ ແລະຈະໄດ້ຮູ້ວ່າພຣະເຢຊູປ່ຽນແປງຊີວິດເຮົາຢ່າງໃດແດ່.

## ນຳພາການສຶກສາພຣະທັມ

4. ໃຫ້ນັກຮຽນຄົນນຶ່ງອ່ານ ໂຣມ 8:1-4 ແລ້ວສົນທະນາຄຳວ່າ " ບໍ່ມີການລົງໂທດ " ຂຽນລົງໃສ່ກະດານຕາມຄວາມຄິດເຫັນຂອງແຕ່ລະຄົນ. (ຜ່ານພົ້ນ, ຊະນະຄວາມບາບແລະຄວາມຕາຍ, ມີອຳນາດໃນພຣະຄຣິດ, ຊັຍຊະນະຮ່ວມກັບພຣະຄຣິດ, ແລະຕໍ່ໆໄປ.....)

5. ອີກເບື້ອງນຶ່ງຂອງກະດານ ໃຫ້ແບ່ງເປັນສອງສ່ວນ. ເບິ່ງໃນພຣະທັມ ໂຣມ 8:5-11 ແລ້ວຂຽນຫົວຂໍ້ໃສ່ທາງເທິງ "ຝ່າຍມະນຸດ" ແລະ "ຝ່າຍພຣະວິນຍານ" ( ຝ່າຍມະນຸດ: ຢູ່ເພື່ອຕົນເອງ, ຕິດຕາມຄວາມຕາຍ, ຕໍ່ສູ້ພຣະເຈົ້າ, ເຮັດສິ່ງທີ່ຂັດພຣະເຈົ້າ, ເປັນຄົນຫລົງແລະຈະພິນາດ. ຝ່າຍພຣະວິນຍານ: ເຮັດສິ່ງທີ່ພຣະເຈົ້າພໍພຣະໄທ, ຕິດຕາມຊີວິດ ແລະ ມີສັນຕິສຸກ, ພຣະວິນຍານນຳພາ )

<u>ຄຳຖາມ</u>: ເຮົາຈະເອົາຊີວິດຝ່າຍວິນຍານຢ່າງໃດ? (ໃຫ້ເບິ່ງໂຣມ 8:13)

6. ອ່ານ 8:14-17 ອ່ານແຮງ. ໃຫ້ທຸກຄົນຕັ້ງໃຈຟັງ.

7. ຊີວິດຄຣິສຕຽນທີ່ແທ້ຈິງຢູ່ໃນໂລກນີ້ເປັນຢ່າງໃດ? ພວກເຮົາຈະປາສຈາກບັນຫາບໍ່? (ບໍ່) ໂຣມ 8:18-30 ໃຫ້ຄຣູເປັນຜູ້ອ່ານ ເພື່ອຈະໄດ້ອ່ານໄວແດ່ ແລະກໍອະທິບາຍໄປດ້ວຍ ວ່າລາງວັນໃນຂ້າງໜ້າຈະເປັນຢ່າງໃດ.

8. ອ່ານ 8:31-39 ໃນຂະນະທີ່ທຸກຄົນກຳລັງຕັ້ງໃຈຟັງຢູ່ນີ້ ໃຫ້ຄຣູອະທິບາຍເຖິງການຮັປກັນສາມຢ່າງ ໃນເຈົ້ຣບົດຮຽນ.

## ນຳບົດຮຽນໄປໃຊ້ກັບຊີວິດ:

9. ພຣະຄັມພີສອນທ່ານຢ່າງໃດແດ່ໃນວັນນີ້? ພຣະເຢຊູມີຄວາມໝາຍຢ່າງໃດໃນຊີວິດຂອງທ່ານ? ແມ່ນຫຍັງທີ່ພຣະເຢຊູໄດ້ມອບໃຫ້ແກ່ພວກເຮົາ? (ຄວາມລອດ, ພຣະວິນຍານ)

10. ການເດີນທາງຂອງຊີວິດຄຣິສຕຽນມີຄວາມລຳບາກບໍ່? (ເພື່ອຈະເປັນຜູ້ທີ່ໃຊ້ໄດ້, ເພື່ອຈະເປັນທີ່ພໍພຣະທັຍພຣະເຈົ້າ, ເພື່ອຈະໄປສູ່ຄວາມສຳເຣັດ.....) ຜູ້ທີ່ບໍ່ມີພຣະວິນຍານເດ ເດີນທາງຢ່າງໃດ?

11. ນຳພາອະທິຖານໃຫ້ພຣະເຈົ້າຊົງຊ່ວຍທຸກໆຄົນ ແລະ ເຂົ້າໄປນະມັສການພຣະເຈົ້າຮ່ວມກັນທຸກໆຄົນ.

# ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 9
## ການປະກາດເພື່ອພຣະຄຣິດໂດຍບໍ່ເຫັນແກ່ຕົວ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: 2 ໂກຣິນໂທ 4:7-11; 5:11-21
ຂໍ້ພຣະຄັມພີສຳລັບເບື້ອງຫລັງ: 2 ໂກຣິນໂທ ບົດ 4 ແລະ ບົດ 5
ຈຸດສຳຄັນຂອງບົດຮຽນນີ້: ເພາະວ່າ ພຣະເຈົ້າໄດ້ເຮັດໃຫ້ມີການຄືນດີ ຣະຫວ່າງເຮົາກັບພຣະຄຣິດ, ພວກເຮົາກໍຄວນຈະແບ່ງປັນຂ່າວການຄືນດີນີ້ ໃຫ້ກັບຄົນອື່ນ ດ້ວຍການນ້ອມ ເຊື່ອຟັງໃນພຣະເຈົ້າ.
ຄຳຖາມເພື່ອການສຳຫລວດ: ທ່ານກຳລັງຮັບໃຊ້ພຣະຄຣິດ ແລະແບ່ງປັນຂ່າວນີ້ດ້ວຍວິນຍານຈິດອັນໃດ ? ຫລື ທ່ານກຳລັງເຮັດຫຍັງຢູ່?
ຈຸດປະສົງຂອງບົດຮຽນນີ້: ເພື່ອຈະໄດ້ຊີ້ໃຫ້ເຫັນ ວ່າ ພຣະວິນຍານທີ່ພວກເຮົາກຳລັງຮັບໃຊ້ຢູ່ນີ້ ແມ່ນພວກເຮົາຮັບໃຊ້ພຣະຄຣິດ ແລະ ແບ່ງປັນຂ່າວດີຂອງພຣະອົງ.

## ແຜນການສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ໃຫ້ຄຣູຊອກຫາຕົວຢ່າງ ກ່ຽວກັບເຣື່ອງການຄືນດີ, ການເຈຣະຈາຕົກລົງໃຫ້ມີການຄືນດີ ຈາກຫນັງສືພິມ, ຈາກໂທຣະທັດ, ຈາກປື້ມຕ່າງໆກໍໄດ້. ອ່ານຫລືວ່າເວົ້າສູ່ຟັງ ໃຫ້ນັກຮຽນປະກອບສ່ວນດ້ວຍ. ແລະແລ້ວກໍໃຫ້ບອກນັກຮຽນວ່າວັນນີ້ພວກເຮົາຈະໄດ້ຮຽນເຣື່ອງການຄືນດີ. ການຄືນດີ ແມ່ນມະນຸດຈະຄືນດີຫາພຣະເຈົ້າຢ່າງໃດ.

2. ເພື່ອຈະຮຽນນັ້ນ ໃຫ້ອ່ານໃຫ້ນັກຮຽນຟັງ ຫລືໃຫ້ນັກຮຽນຄົນໃດຄົນນຶ່ງອ່ານ ໃນຄຳນຳຂອງ ເຈົ້ຽບົດຮຽນກໍໄດ້. ແລ້ວກໍໃຫ້ບອກວ່າ ນີ້ແມ່ນຈົດຫມາຍຂອງໂປໂລທີ່ຂຽນຫາຊາວເມືອງໂກຣິນໂທ.

### ນຳພາສຶກສາພຣະທັມ:

3. ອ່ານ 2 ໂກຣິນໂທ 4:7 ; ເມື່ອອ່ານຈົບແລ້ວໃຫ້ວາງຄຳຖາມ: ແມ່ນຫຍັງຄືຂອງທີ່ມີຄ່າຢູ່ໃນພາຊະນະດິນ? ຫລັງຈາກນັກຮຽນຕອບສອງສາມຄົນແລ້ວຄຣູຈຶ່ງອະທິບາຍ ໂດຍອີງໃສ່ເຈົ້ຽບົດຮຽນ. ຄວາມຫມາຍທີ່ແທ້ຈິງນັ້ນກໍຄືອົງພຣະເຢຊູຄຣິດ ຊົງສະຖິດຢູ່ໃນຜູ້ທີ່ເຊື່ອທຸກຄົນ ແລະຍັງບໍ່ພໍເທົ່ານັ້ນ ພຣະວິນຍານບໍຣິສຸດກໍຊົງຢູ່ໃນເຮົາ, ຊົງຊ່ວຍພວກເຮົາ ແລະຊົງໃຫ້ອຳນາດແກ່ພວກເຮົາ. ບອກດ້ວຍວ່າ ເປັນການຍາກ ເພາະອຳນາດທີ່ຍິ່ງໃຫຍ່ສະຖິດຢູ່ໃນຮ່າງກາຍອັນອ່ອນແອຂອງພວກເຮົາ.

4. ອ່ານ 4:13-14 ວາງຄຳຖາມ:

ພວກເຮົາຄວນວາງມາດຕະຖານຄວາມເຊື່ອຂອງພວກເຮົາຢູ່ໃສ?

ຈົ່ງຮັບຮູ້ວ່າພຣະອົງ "ພຣະຜູ້ຊ່ວຍຜູ້ຊົງເຮັດໃຫ້ພຣະເຢຊູຊົງຄືນພຣະຊົນ ຈະເຮັດໃຫ້ພວກເຮົາຄືນມີຊີວິດດ້ວຍ" ພຣະຜູ້ນັ້ນແຫລະຈະຊ່ວຍພວກເຮົາໃນການປະກາດການຄືນດີ. ທ່ານຄິດວ່າພວກເຮົາຈະເຮັດໄດ້ຫລືບໍ່?

5. ອ່ານ 2 ໂກຣິນໂທ 5:11-21.

ໃຫ້ຟັງພຣະຄັມພີຄັກໆ ແລ້ວ ວາງຄຳຖາມວ່າ ມີຈັກຢ່າງທີ່ກະຕຸ້ນໃຫ້ພວກເຮົາທຳງານການຄືນດີນີ້, ອີງໃສ່ເຈົ້າຮູ້ບົດຮຽນ ດັ່ງຕໍ່ໄປນີ້:

ກ. ເຊື່ອຟັງແລະໂຄຣົບນັບຖືພຣະເຈົ້າ (5:11)

ຂ. ເຫັນຄົນອື່ນມີຄຸນຄ່າ (5:11-13)

ຄ. ຄວາມຮັກຂອງພຣະຄຣິດເພື່ອທຸກຄົນ (5:14-15)

ງ. ເຫັນທຸກຢ່າງເຫມືອນຄົນຂອງພຣະຄຣິດ (5:16-19)

ຈ. ຮັບຜິດຊອບຫນ້າທີ່ງພຣະເຈົ້າມອບໃຫ້ (5:19-21)

ໃຫ້ສົນທະນາແຕ່ລະຂໍ້ມາ ວ່າເປັນຫຍັງພວກເຮົາຈຶ່ງຄວນເຮັດໃຫ້ມີການຄືນດີ.

6. ແມ່ນຫຍັງທີ່ເຮັດໃຫ້ມີ ການຄືນດີ ເກີດຂຶ້ນ?

ການຄືນດີມີຜົນຫຍັງສຳລັບພຣະເຈົ້າ? ມີຜົນຫຍັງແດ່ສຳລັບຜູ້ເຮັດວຽກນີ້? ມີຜົນຫຍັງແດ່ຕໍ່ຜູ້ທີ່ຍັງບໍ່ທັນເຊື່ອ?

<u>ນຳບົດຮຽນໄປໃຊ້ກັບຊີວິດຈິງ</u>

7. ເຊີນຊວນນັກຮຽນໃນຫ້ອງໃຫ້ຫລັບຕາ, ຄຶດເຖິງຂໍ້ພຣະທັມ 2 ໂກຣິນໂທ 5:21 .

ຮຽກຮ້ອງໃຫ້ນັກຮຽນ ເອົາຂໍ້ພຣະທັມຕອນນີ້ໄວ້ໃນຈິດໃຈ. ທ່ອງຈຳໃຫ້ໄດ້ແລ້ວຈຶ່ງໃຫ້ກ້າວຂາອອກຫ້ອງໄປ.

8. ນຳພາອະທິຖານ ຫນູນໃຈນັກຮຽນໃຫ້ໄປນະມັສການພຣະເຈົ້າ, ຫນູນໃຈໃຫ້ນັກຮຽນຖວາຍຕົວໃນການເຮັດໃຫ້ມີການຄືນດີກັບພຣະເຈົ້າ ກັບຄົນອື່ນ ແລະກັບສັດຕຣູ.

# <u>ຄຳແນະນຳສຳລັບຄຣູສອນ</u>
# <u>ບົດຮຽນທີ 10</u>
# <u>ຄວາມເຊື່ອທີ່ໝາຍເຖິງການເຊື່ອແທ້</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ເຮັບເຣີ 11:1-2, 8-28; 11:32-12:3
<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ເຮັບເຣີ 11:1--12:17
<u>ຈຸດສຳຄັນຂອງບົດຮຽນນີ້:</u> ມີຄວາມເຊື່ອແບບຄຣິສຕຽນ ໝາຍຄວາມວ່າ ຕ້ອງດຳເນີນຊີວິດໃນຄວາມເຊື່ອ, ເຖິງແມ່ນວ່າຊີວິດຈະຫຍຸ້ງຍາກຂັດສົນ, ຫລືພົບກັບອຸປສັກກໍຕາມ.
<u>ຄຳຖາມເພື່ອການສຳຫລວດ:</u> ຢ່າງໃດກໍຕາມ, ແມ່ນຫຍັງຄືຄວາມເຊື່ອ?
<u>ຈຸດປະສົງຂອງບົດຮຽນນີ້:</u> ຈົ່ງວັດແທກຄວາມເຊື່ອຂອງຂ້ອຍ ກັບ ບຸກຄົນຕົວຢ່າງທີ່ມີໃນພຣະຄັມພີ, ຂ້ອຍຢູ່ໃນລະດັບໃດ?
<u>ເນັ້ນໜັກໃນພາກທິສດີ ແລະ ພາກປະຕິບັດດ້ວຍ:</u> ເພື່ອເພີ້ມພລັງຜູ້ທີ່ຈະປະກາດໃຫ້ແກ່ຄຣິສຕະຈັກ ແລະ ຈະອອກໄປປະກາດທົ່ວໂລກ.

## <u>ແຜນສຳລັບການສອນ</u>

<u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u>

1. ຄຣູຈະສອນໃຫ້ນັກຮຽນ ໃນວິທີຕໍ່ຄຳສັພນາມໃສ່ຫລັງຄຳນາມ ໃຫ້ຕໍ່ຄຳທີ່ດີ. ຕົວຢ່າງ: ລຸງແດງໃຈດີ, ຍິ້ມງ່າຍ ແລະມັກຊ່ອຍເຫລືອເປັນຕົ້ນ. ໃຫ້ຮ້ອງຊື່ແຕ່ລະຄົນ ໂດຍຕໍ່ຄຳສັພນາມໄປດ້ວຍ ຈະມີ ນຶ່ງ ສອງ ສາມ ສີ່ ຫ້າ ກໍແລ້ວແຕ່. ບໍ່ຈຳເປັນຕ້ອງອະທິບາຍຄຳສັພນາມນັ້ນ ເພາະຕໍ່ໄປໃນບົດຮຽນ ພວກເຮົາຈະໄດ້ສຶກສາຮ່ວມກັນ.

2. ບອກໃຫ້ນັກຮຽນຮູ້ວ່າ ໃນວັນນີ້ບົດຮຽນຂອງພວກເຮົາຈະໄດ້ຮຽນ ຈາກບຸກຄົນທີ່ມີຄວາມເປັນຕົວຢ່າງອັນດີທີ່ສຸດ ໃນເຣື່ອງຄວາມເຊື່ອ. ພວກເຂົາເຈົ້າດຳເນີນຊີວິດຄືແນວໃດ ພວກເຮົາຈະໄດ້ສຶກສາຊີວິດຂອງເຂົາເຈົ້າ.

<u>ນຳພາການສຶກສາພຣະທັມ</u>

3. ວາງຄຳຖາມ: ຄວາມເຊື່ອແມ່ນຫຍັງ? ອ່ານເຮັບເຣີ 11:1-2 .
   ກ. ຄວາມເຊື່ອ ຄືຄວາມແນ່ນອນໃຈ
   ຂ. ຄວາມເຊື່ອ ແມ່ນພື້ນຖານຂອງຄວາມຫວັງ
   ຄ. ຄວາມເຊື່ອ ແມ່ນເອກສານສຳຄັນເພື່ອຢັ້ງຢືນເຖິງການເປັນເຈົ້າຂອງ.
   ງ. ຄວາມເຊື່ອແມ່ນຄວາມແນ່ໃຈໃນຄວາມຫວັງຂ້າງໜ້າ.

ເສີມຂຍາຍຄໍາອະທິບາຍໃຫ້ກວ້າງຂວາງອອກ ໂດຍອີງໃສ່ໃນເຈັ້ຽບົດຮຽນ.

4. ແມ່ນໃຜທີ່ທ່ານເຫັນວ່າ ຄວນເປັນຕົວຢ່າງໃຫ້ແກ່ທ່ານໄດ້ ໃນຊີວິດຄຣິສຕຽນ ?
ອ່ານໃນພຣະຄັມພີ ເຮັບເຣີບົດທີ 11. ຊຶ່ງທັງບົດແມ່ນໄດ້ຍົກຕົວຢ່າງການກະທໍາຂອງແຕ່ລະທ່ານດ້ວຍຄວາມເຊື່ອ. ເວລາອ່ານແລ້ວ ໃຫ້ຮ່ວມກັນເອີ້ນຊື່ອອກມາ ແລ້ວອະທິບາຍແຕ່ລະຄົນ.

5. ອ່ານ 11:32-40 . ອະທິບາຍ ຄົນພວກນີ້ ໂດຍອີງໃສ່ເຈັ້ຽບົດຮຽນ: ກີເດໂອນ, ບາຣາກ, ແຊມຊັນ, ເຢບທາ, ດາວິດ ແລະຊາມູເອນ. ຍົກຄວາມເຊື່ອຂອງແຕ່ຄົນ ໃຫ້ເຫັນການເດັ່ນຂອງພວກເຂົາເຈົ້າ.

6. ອ່ານເຮັບເຣ 12:1-3 ເມື່ອພວກເຮົາຫາກເຫັນຄວາມເຊື່ອຂອງພວກເຂົາເຈົ້າແລ້ວ, ຜູ້ຂຽນຈຶ່ງໄດ້ໜູນໃຈ ພວກເຮົາທັງຫລາຍ ວ່າ ຢ່າງໃດແດ່?

ໃຫ້ນັກຮຽນພາກັນອອກຄໍາຄິດຄໍາເຫັນ ໃນການແລ່ນແຂ່ງຂັນ, ໃນການປັບປຸງການເບິ່ງ (ຕາ).

<u>ນໍາບົດຮຽນໄປໃຊ້ກັບຊີວິດ</u>

7. ອ່ານ ຢາໂກໂບ 2: 14-17.
   ທ່ານມີຄວາມເຊື່ອຫລືບໍ່?
   ທ່ານຈະເຮັດຢ່າງໃດກັບຄວາມເຊື່ອທີ່ທ່ານມີຢູ່?
   ທ່ານຄວນຈະຮັບຜິດຊອບໃນຄວາມເຊື່ອທີ່ທ່ານມີຫລືບໍ່?
   ຖ້າມີຄົນກ່າວແກ່ທ່ານວ່າ ເຂົາມີຄວາມເຊື່ອຢ່າງແຂງແຮງ ແຕ່ເຂົາບໍ່ມີການປະຕິບັດ ທ່ານຈະເຊື່ອເຂົາຫລືບໍ່?
   ທ່ານເດ, ຖ້າທ່ານຈະບອກໃຫ້ຄົນອື່ນຮູ້ ວ່າທ່ານມີຄວາມເຊື່ອ ແຕ່ບໍ່ໄດ້ປະຕິບັດ ທ່ານຈະໃຫ້ຄົນເຂົາເຊື່ອທ່ານບໍ່?

8. ປິດຫ້ອງຮຽນດ້ວຍການອະທິຖານ, ໃນຄໍາອະທິຖານນັ້ນ ແມ່ນໃຫ້ເນັ້ນເຖິງຄວາມເຊື່ອໃຫ້ຫລາຍໆ.

# ຄຳແນະນຳຄຣູສອນ
# ບົດຮຽນທີ 11
# ຫົວໃຈຂອງຂ່າວປະເສີດຄືຄວາມຮັກ

---

| | |
|---|---|
| ຂໍ້ພຣະຄຳພີສຳລັບບົດຮຽນ: | 1ໂຢຮັນ 4:7-21 |
| ຂໍ້ພຣະຄຳພີສຳລັບເບື້ອງຫລັງ: | 1ໂຢຮັນ 4:7-21 |
| ຈຸດສຳຄັນຂອງບົດຮຽນນີ້: | ເພາະວ່າພຣະເຈົ້າຊົງຮັກພວກເຮົາ ພວກເຮົາຈຶ່ງຕ້ອງຮັກຊຶ່ງກັນແລະກັນເພື່ອສແດງອອກເຖິງຄວາມສຳພັນຂອງພວກເຮົາກັບພຣະເຈົ້າຢ່າງແທ້ຈິງ |
| ຄຳຖາມເພື່ອການສຳຫລວດ: | ພວກເຮົາຮັກທຸກໆຄົນຢ່າງຈິງໃຈຫລືບໍ່? |
| ຈຸດປະສົງຂອງບົດຮຽນນີ້: | ໃນອາທິດນີ້ພວກເຮົາຈະຫາທຸກໆວິທີທາງ ເພື່ອສແດງອອກເຖິງຄວາມຮັກທີ່ມີຕໍ່ຄົນທັງປວງ |

| ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ |
|---|
| • ແບ່ງປັນຂ່າວປະເສີດຂອງອົງພຣະເຢຊູຄຣິດໃຫ້ກັບທຸກໆຄົນ. |
| • ຮັບໃຊ້ທຸກໆຄົນໃນພຣະນາມຂອງພຣະອົງ. |
| • ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີຕໍ່ຄົນທັງປວງ. |
| • ປັບປຸງຄອບຄົວຄຣິສຕຽນໃຫ້ຈະເຣີນຂຶ້ນ. |
| • ເສີມສ້າງຄຣິສຕະຈັກທີ່ມີຢູ່ໃຫ້ເຂັ້ມແຂງ ແລະ ສ້າງຄຣິສຕະຈັກໃຫມ່ໃຫ້ທະວີຫລາຍຂຶ້ນ. |

## ແຜນການສຳລັບການສອນ

### ຄຳແນະນຳຈົດໝາຍຂອງໂຢຮັນສະບັບຕົ້ນ

ຈົດໝາຍສະບັບຕົ້ນ ອັຄສາວົກໂຢຮັນນີ້ເປັນພາກສ່ວນນຶ່ງໃນພຣະສັນຍາໃຫມ່ ແລະເປັນຈົດໝາຍທົ່ວໄປ. ສາຍເຫດທີ່ເອີ້ນວ່າຈົດໝາຍທົ່ວໄປນັ້ນ ກໍເພາະຈົດໝາຍນີ້ບໍ່ໄດ້ເຈາະຈົງສົ່ງໄປຄຣິສຕະຈັກໃດ ຄຣິສຕະຈັກນຶ່ງ. ແຕ່ຈົດໝາຍນີ້ໄດ້ວຽນໄປໃນເມືອງເອເຟໂຊ ຫລື ເມືອງໂກຣິນໂທໃນສັຕວັດທີນຶ່ງ ແລະສັຕວັດທີສອງ.

ຈົດໝາຍນີ້ເປັນຈົດໝາຍສັ້ນ ໃນສມັຍນີ້ມັກເອີ້ນກັນວ່າບົດເທສນາຫລືໃບປິວຫລາຍກ່ວາ. ມີຂໍ້ສັງເກດໄດ້ອີກວ່າຈົດໝາຍສະບັບນີ້ບໍ່ໄດ້ບອກເຖິງຜູ້ຮັບ ແລະ ບໍ່ມີຄຳສັ່ງລາມ້ວນທ້າຍ. ແຕ່ມີຂໍ້ສັງເກດຢູ່ວ່າ ເມື່ອອັຄສາວົກຂຽນໄປນັ້ນ ລາວໄດ້ເຈາະຈົງຂຽນໄປຫາຜູ້ທີ່ລາວຮູ້ດີ ເຊັ່ນລາວໃຊ້ຄຳວ່າ, "ລູກນ້ອຍທັງຫລາຍຂອງເຮົາເອີຍ" ແລະມີອີກຄຳອື່ນໆ ເຊັ່ນ "ເຮົາ" ຫລືວ່າ "ພວກເຮົາ". ຄຳເຫລົ່ານີ້ໄດ້ໃຊ້ຢູ່ເລື້ອຍໆໃນຈົດໝາຍນີ້.

ສາສນາຈານໄດ້ໃຫ້ຄວາມເຫັນວ່າ ຈົດໝາຍນີ້ໄດ້ຂຽນຢູ່ເມືອງເອເຟໂຊ. ເພາະເມືອງເອເຟໂຊເປັນສູນກາງຂອງການຄ້າໃນຂົງເຂດເອເຊັຽນ້ອຍ. ສະນັ້ນ ຈົດໝາຍນີ້ຈຶ່ງໄດ້ໝູນວຽນຢູ່ໃນເມືອງນີ້.

ຈົດໝາຍສະບັບຕົ້ນຂອງໂຢຮັນນີ້ໄດ້ເວົ້າເຖິງຫລາຍໆເຣື່ອງ. ແຕ່ວ່າທຸກໆເຣື່ອງກໍໄດ້ຊີ້ບອກພວກເຂົາເຖິງຄວາມເຊື່ອໃນພຣະບຸດຂອງພຣະເຈົ້າຄືອົງພຣະເຢຊູຄຣິດ. ອຸປສັກໃນຄວາມເຊື່ອທີ່ພວກເຂົາມີນັ້ນ ກໍເພາະວ່າມີຫລາຍຄວາມເຊື່ອໄດ້ເຂົ້າມາທຽມແອກໃນຄວາມເຊື່ອທີ່ມີຢູ່ໃນອົງພຣະເຢຊູຄຣິດ. ພວກນີ້ເອີ້ນວ່າ "ນອສຕິຊີເຊີມ" (Gnosticism) ມີຄວາມໝາຍວ່າ "ຄວາມຮູ້". ຊຶ່ງມີຫລັກຄວາມເຊື່ອມາຈາກສາສນາພວກຕາເວັນອອກປະສົມກັບຫລັກປັສຍາຂອງຊາວກຣີກ. ພວກເຂົາເຊື່ອວ່າໂດຍອາສັຍ "ຄວາມຮູ້" ພວກເຂົາສາມາດຈະເຂົ້າຫາພຣະເຈົ້າໄດ້.

ແຕ່ອັຄສາວົກໂຢຮັນໄດ້ຊີ້ບອກວ່າ ແມ່ນຄວາມຮັກທີ່ພຣະເຈົ້າມີຕໍ່ພວກເຮົາ ແລະຍ້ອນຄວາມຮັກນັ້ນ ພຣະເຈົ້າໄດ້ສົ່ງພຣະບຸດຂອງພຣະອົງມາເພື່ອເປັນທາງຊົງຍົກຜິດບາບຂອງພວກເຮົາທັງຫລາຍ. ແມ່ນພຣະເຈົ້າໄດ້ມາສະຖິດຢູ່ໃນເຮົາທັງຫລາຍ. ບໍ່ແມ່ນຍ້ອນພວກເຮົາມີຄວາມຮູ້ຈຶ່ງໄດ້ນຳພວກເຮົາໄປສູ່ຄວາມພົ້ນ.

<u>ຕຣີເອການຸພາບ</u>

"ຕຣີເອການຸພາບ" ສັບນີ້ບໍ່ມີຢູ່ໃນພຣະຄັມພີ. ແຕ່ຄວາມໝາຍຂອງ "ຕຣີເອການຸພາບ" ມີຢູ່ໃນພຣະສັນຍາໃໝ່. "ຕຣີເອການຸພາບ" ບໍ່ໄດ້ໝາຍເຖິງວ່າມີພຣະເຈົ້າສາມອົງ. ເພາະວ່າ ຊາວເຮັບເຣີນັ້ນມີຫລັກຄວາມເຊື່ອຄື ມີແຕ່ພຣະເຈົ້າອົງດຽວຕລອດມາ ໃນພຣະສັນຍາເດີມຈົນຮອດພຣະສັນຍາໃໝ່ກໍເຊັ່ນດຽວກັນ. ຄວາມໝາຍຂອງ "ຕຣີເອການຸພາບ" ພົບໄດ້ໃນພຣະສັນຍາໃໝ່ນັ້ນແມ່ນ ໃນຂນະພຣະເຢຊູຄຣິດຮັບບັບຕິສະມາ(ມັດທາຍ 3:13-17). ພຣະຄັມພີໄດ້ກ່າວເຖິງ ພຣະບິດາ, ພຣະບຸດ, ແລະພຣະວິນຍານບໍຣິສຸດ. ອັຄສາວົກໂປໂລ ກໍມີຄວາມເຫັນດຽວກັນເຊັ່ນຢູ່ໃນພຣະທັມ ໂຣມ 1:1-7. ຄຣິສຕຽນສມັຍນີ້ກໍຮັບຮູ້ ແລະເຂົ້າໃຈວ່າ ພຣະອົງຊົງປາກົດເປັນສາມຕົນ ແຕ່ແມ່ນພຣະເຈົ້າອົງດຽວ. ພຣະເຈົ້າຊົງເປັນຜູ້ຊົງສ້າງ, ພຣະອົງຊົງເປັນຜູ້ໄຖ່ ແລະພຣະອົງຊົງເປັນຜູ້ຕັດສິນ. ພຣະເຈົ້າເປັນຜູ້ຊົງສ້າງຄືພຣະບິດາ, ພຣະອົງຊົງເປັນຜູ້ໄຖ່ ຄືພຣະເຢຊູຄຣິດ ພຣະອົງຊົງສະພາບຂອງພຣະເຈົ້າ ແລະຊົງຖືກຳເນີດເປັນມະນຸດ, ແລະພຣະອົງຊົງເປັນຜູ້ຕັດສິນ ຄືພຣະວິນຍານບໍຣິສຸດ. ພຣະອົງໄດ້ຕັດສິນກ່າວໂທດເຖິງຄວາມອະທັມຂອງມະນຸດ. ເພື່ອໃຫ້ພວກເຂົາກັບໃຈໃໝ່ ຮັບເອົາອົງພຣະເຢຊູຄຣິດມາເປັນພຣະຜູ້ໄຖ່ຂອງພວກເຂົາ ແລະຍັງກ່າວໂທດຄຣິສຕຽນໃຫ້ຢູ່ໃນຄວາມຊອບທັມ.

<u>ນຳພາສຶກສາ</u>

ຖ້າມີຊາຍໜຸ່ມຄົນນຶ່ງເລົ່າເຣື່ອງຊີວິດຂອງລາວໃຫ້ພວກເຮົາຟັງວ່າ ລາວເຄີຍຮັບເຊື່ອຢູ່ໃນຄຣິສຕະຈັກ ແລະກໍມີພາກສ່ວນໃນກິຈການຕ່າງໆໃນຄຣິສຕະຈັກ. ແຕ່ລາວຮູ້ສຶກວ່າ ລາວບໍ່ໝັ້ນໃຈໃນຄວາມເຊື່ອຂອງລາວ. ເພາະວ່າ ຊີວິດຂອງລາວນັ້ນໃຊ້ໄປໃນທາງທີ່ເໝືອນກັບວ່າລາວເປັນຄົນທີ່ບໍ່ມີຄວາມເຊື່ອ. ພວກເຮົາຈະໃຊ້ພຣະທັມ 1ໂຢຮັນ 4:7-21 ໜູນໃຈລາວໄດ້ວິທີໃດ?

<u>ຂໍ້ຄິດໜູໃຈນັກຮຽນ</u>

1. ຄວາມຮັກຂອງພຣະເຈົ້າເປັນແບບຢ່າງເພື່ອໃຫ້ພວກເຮົາຮັກຄົນທົ່ວໄປ.

2. ພວກເຮົາຈະຕ້ອງຮັກຜູ້ທີ່ບໍ່ເປັນຕາໜ້າຮັກ.

3. ພຣະລັກສະນະຂອງພຣະເຈົ້ານັ້ນຄືຄວາມຮັກ ແລະຄວາມຮັກທີ່ມີຕໍ່ຄົນທົ່ວໄປ.

4. ບໍ່ວ່າພວກເຮົາຈະຢູ່ທີ່ໃດ ພຣະອົງຊົງສະຖິດຢູ່ກັບພວກເຮົາສເມີ.

5. ຊີວິດຂອງພວກເຮົາຈະເປັນຢ່າງໃດຖ້າປາສຈາກຄວາມຢ້ານ?

6. ພວກເຮົາຈະປະພຶດຢ່າງໃດກັບພີ່ນ້ອງທີ່ພວກເຮົາເອີ້ນວ່າຄຣິສຕຽນ?

<u>**ຄຳແນະນຳຄູສອນ**</u>

<u>**ບົດຮຽນທີ 12**</u>

<u>**ຄຳສັນຍາເຣື່ອງການສະເດັດມາ**</u>

---

<u>ຂໍ້ພຣະຄຳພີສຳລັບບົດຮຽນ:</u> 2 ເປໂຕ 3:3-15 ກ

<u>ຂໍ້ພຣະຄຳພີສຳລັບເບື້ອງຫລັງ:</u> 2 ເປໂຕ 3:3-15 ກ

<u>**ຈຸດສຳຄັນຂອງບົດຮຽນນີ້:**</u> ເພາະວ່າພຣະຄຣິດສັນຍາວ່າຈະສະເດັດມາພວກເຮົາຈະຕ້ອງດຳເນີນຊີວິດຂອງພວກເຮົາດ້ວຍຄວາມສັດຊື່.

<u>**ຄຳ** ຖາມເພື່ອການສຳຫລວດ:</u> ເມື່ອພຣະອົງສະເດັດກັບມາ ພຣະອົງຈະພົບວ່າພວກເຮົາຍັງສັດຊື່ຕໍ່ພຣະອົງຫລືບໍ່?

<u>ຈຸດປະສົງຂອງບົດຮຽນນີ້:</u> ພິສູດເຖິງເຫດຜົນທີ່ເຊື່ອວ່າພຣະອົງຈະສະເດັດກັບມາອີກ ແລະພຣະອົງຈະພົບວ່າພວກເຮົາຍັງຕັ້ງໝັ້ນຄົງຢູ່ດ້ວຍຄວາມສັດຊື່ຕໍ່ພຣະອົງ.

<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ</u>

- ແບ່ງປັນຂ່າວປະເສີດຂອງອົງພຣະເຢຊູຄຣິດໃຫ້ກັບທຸກໆຄົນ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີຕໍ່ຄົນທັງປວງ.

<u>ແຜນການສຳລັບການສອນ</u>

<u>ຄຳແນະນຳຈົດໝາຍຂອງເປໂຕ ສະບັບ ທີ ສອງ</u>

ຖ້ອຍຄຳທີ່ໃຊ້ໃນຈົດໝາຍ 2 ເປໂຕ ນີ້ຮູ້ສຶກວ່າບໍ່ລ່ຽນໄຫລເມື່ອທຽບກັບຈົດໝາຍ 1 ເປໂຕ. ສາສນາຈານໄດ້ອະທິບາຍວ່າ ອັຄສາວົກເປໂຕເປັນຜູ້ຂຽນເອງ. ສາຍເຫດອາດຈະເປັນໄດ້ຍ້ອນວ່າອັຄສາວົກເປໂຕເປັນຊາວຢິວ. ເມື່ອໃຫ້ລາວມາຂຽນພາກຣີກແລ້ວ ກໍອາດຈະບໍ່ລ່ຽນໄຫລຄືກັນກັບຊາວກຣີກທີ່ເຂົາຂຽນພາສາຂອງເຂົາເອງ. ສ່ວນຈົດໝາຍ 1 ເປໂຕນັ້ນແມ່ນ ທ່ານຊີລາວັນ (Silvanus) ເປັນຜູ້ຂຽນຈາກຄຳເວົ້າຂອງອັຄສາວົກເປໂຕ. ທ່ານຊີລາວັນໃຊ້ພາສາກຣີກໄດ້ລ່ຽນໄຫລກວ່າ (1 ເປໂຕ 5:12).
ພຣະທັມເຫລັ້ມນີ້ໄດ້ຖືກຮັບຮູ້ເຂົ້າໃນພຣະສັນຍາໃໝ່ຫລ້າຊ້າສົມຄວນ. ສາຍເຫດທີ່ຖືກຮັບຮູ້ຊ້ານັ້ນກໍເພາະວ່າສາສນາຈານສມັຍນັ້ນຍັງບໍ່ໝັ້ນໃຈວ່າແມ່ນຈົດໝາຍຂອງອັຄສາວົກເປໂຕແນ່ນອນຫລືບໍ່. ຈົນກ່ວາ ອໍຣິເຈັນ(Origen) ແລະ ເຄລເມັນ (Clement) ຈາກ ອາເລັກຊັນເດັຽ (Alexandria) ຜູ້ນຳຄຣິສຕສາສນາທັງສອງທ່ານໄດ້ອ້າງອີງເຖິງພຣະທັມເຫລັ້ມນີ້ໃນສັຕວັດທີສາມ. ໃນສັຕວັດທີສີ່ຈຶ່ງໄດ້ຮັບຮູ້ພຣະທັມເຫລັ້ມນີ້.
ພຣະທັມເຫລັ້ມນີ້ເປັນຈົດໝາຍທົ່ວໄປ. ຈຸດປະສົງຂອງຈົດໝາຍນີ້ແມ່ນຂຽນໄປເຖິງຊາວຄຣິສຕຽນທີ່ກະຈັດກະຈ່າຍໄປ ແລະເປົ້າໝາຍຂອງພຣະທັມເຫລັ້ມນີ້ຄືແຈ້ງເຫດການໃຫ້ຮູ້ ແລະເປັນຈົດໝາຍໜູນໃຈ.

ພຣະທັມ ຂ ເປໂຕເລີ້ມຕົ້ນດ້ວຍໃຈຄວາມທີ່ກ່າວເຖີງຄວາມຈິງ, ບົດທີສອງກ່ຽວກັບການປະເຊີນກັບຄຣູສອນປອມ, ແລະບົດທີສາມເປັນບົດຣຽນປະຈໍາອາທິດນີ້ ການປະເຊີນກັບບັນຫາສັງຄົມ ແລະຂາດການຫນູນໃຈຖ້າມກາງຄຣິສຕຽນ. ພຣະທັມ ຂ ເປໂຕ ບົດທີ 3 ໃຫ້ການຫນູນໃຈດ້ວຍພື້ນຖານອັນມີຄວາມຫວັງ.

<u>ຄວາມເຫັນກ່ຽວກັບຫລັກຄໍາສອນເຣື່ອງພັນປີ</u> (Millenial)

ມີຄຣິສຕຽນສາມກຸ່ມທີ່ມີຄວາມເຫັນໃນການຕີຄວາມຫມາຍພຣະຄັມພີເຣື່ອງພັນປີນີ້ບໍ່ຄືກັນ. ກຸ່ມທີ່ເອີ້ນກັນວ່າເອເມີລີນຽມລິເຊີມ (Amillennialism) ພວກນີ້ມີຄວາມເຫັນວ່າ ພຣະຄຣິດຈະບໍ່ມາປົກຄອງໂລກເປັນຕົນເປັນຕົວໃນການສະເດັດມາ ແລະການພິພາກສາ. ແຕ່ພຣະອົງຈະມາປົກຄອງທາງຝ່າຍຈິດວິນຍານຂອງຜູ້ທີ່ເຊື່ອ. ຄໍາວ່າພັນປີນັ້ນເປັນພຽງແຕ່ສັນຍາລັກເທົ່ານັ້ນ. ກຸ່ມທີສອງຄື ໂພສເມີລີນຽມລິເຊີມ (Postmillennialism). ກຸ່ມນີ້ມີຄວາມເຫັນວ່າ ພຣະຄຣິດໄດ້ມາປົກຄອງໂລກແລ້ວເລີ້ມຕັ້ງແຕ່ຂ່າວປະເສີດໄດ້ປະກາດ. ພຣະອົງໄດ້ຮັບໄຊຊະນະຢູ່ສເມີຕັ້ງແຕ່ນັ້ນມາ. ຄວາມຊົ່ວຈະຕ້ອງພິນາດໄປແລະສັນຕິສຸກຈະຕາມມາ. ກຸ່ມທີ່ສາມຄື ປຣີເມີລີນຽມລີຊີມ (Premillennialism) ກຸ່ມນີ້ຍັງລໍຄອຍຖ້າການສະເດັດມາຂອງພຣະເຢຊູຄຣິດຢູ່ ເມື່ອພຣະອົງສະເດັດມາແລ້ວ ພຣະອົງຈະເລີ້ມປົກຄອງໂລກເປັນເວລາພັນປີ. ສໍາລັບຜູ້ທີ່ເຊື່ອໃນພຣະອົງຈະຟື້ນຂື້ນມາຈາກຕາຍ ແລະຈະປົກຄອງໂລກຮ່ວມກັບພຣະອົງໃນຣະຫວ່າງພັນປີ.

ສະນັ້ນ ພວກເຮົາຈະເຫັນມີຄຣິສຕຽນສາມກຸ່ມນີ້ທີ່ມີຄວາມເຫັນບໍ່ຄືກັນຕ່າງກໍມີເຫດຜົນຂອງໃຜລາວທີ່ສອນກັນຢູ່ປະຈຸບັນນີ້. ນັ້ນຂື້ນຢູ່ກັບວ່າທ່ານຢູ່ຄນະໃດ.

ໃຈຄວາມ ແລະຫລັກຄໍາສອນໃນພຣະທັມ ຂ ເປໂຕ ບົດທີສາມນີ້ ຈະພົບໄດ້ໃນພຣະທັມເຫລົ່ານີ້ອື່ນໆ ເຊັ່ນ: ພຣະທັມ ດານີເອນ, ມັດທາຍ ບົດທີ່ 24-25, ມາຣະໂກ ບົດທີ່ 13, ລູກາ ບົດທີ 17:26-35; 21:34-36, 1 ເທຊະໂລນີກ 4:13-48, ແລະພຣະທັມ ພຣະນິມິດ.

<u>ຂໍ້ຄິດຫນູນໃຈ</u>

1. ຜູ້ເຍາະເຍີ້ຍຄຣິສຕຽນນັ້ນ ພວກເຂົາຄິດວ່າພຣະເຈົ້າຂອງຄຣິສຕຽນນັ້ນບໍ່ມີຄວາມສາມາດ.
2. ການສະເດັດມາຄັ້ງທີສອງຂອງພຣະຄຣິດນັ້ນເປັນບົດຣຽນຊີ້ໃຫ້ເຫັນວ່າພຣະເຈົ້າຊົງມີຄວາມອົດທົນຕໍ່ມະນຸດ, ພຣະອົງເປັນທີ່ໄວ້ວາງໃຈໄດ້, ແລະຊົງສັດຊື່ຕໍ່ພຣະສັນຍາຂອງພຣະອົງຕລອດມາ.
3. ອັຄສາວົກ ເປໂຕມີຈຸດປະສົງໃຫ້ຜູ້ອ່ານເຫັນວ່າ ໄປປະກາດຂ່າວປະເສດໃຫ້ຄົນບາບກັບໃຈໃຫມ່ແລະການຊົງໄຖ່ໃຫ້ພົ້ນນັ້ນສໍາຄັນກວ່າທີ່ຈະໄປນັ່ງລໍຄອຍຖ້າການສະເດັດມາຂອງພຣະຄຣິດ.
4. ພຣະຄຸນຂອງພຣະອົງມີໄວ້ສໍາລັບຜູ້ທີ່ຈະກັບໃຈໃຫມ່ ແລະການຕັດສິນລົງໂທດຍ້ອນການເຮັດບາບມີໄວ້ແນ່ນອນສໍາລັບຜູ້ທີ່ເມີນເສີຍ.
5. ຄຣິສຕຽນມີສັນຕິສຸກທີ່ມາຈາກພຣະເຈົ້າ ເພາະພຣະອົງຊົງເປັນຜູ້ຄຸ້ມຄອງສັພທຸກສິ່ງທີ່ພຣະອົງໄດ້ຊົງສ້າງ.
6. ຄຣິສຕຽນໄດ້ຮັບຊີວິດອັນຄົບບໍຣິບູນໃນໂລກນີ້ ແລະຮູ້ວ່າພຣະອົງຍັງມີສິ່ງທີ່ດີເລີດໄວ້ສໍາລັບພວກເຂົາອີກ.

# <u>ຄຳແນະນຳຄູຮສອນ</u>
# <u>ບົດຮຽນທີ 13</u>
# <u>ພຣະເມສານ້ອຍຊົງພຣະກຣຸດຕິຍົດ</u>

---

<u>ຂໍ້ພຣະຄຳພີສຳລັບບົດຮຽນ:</u> ພຣະນິມິດ 5
<u>ຂໍ້ພຣະຄຳພີສຳລັບເບື້ອງຫລັງ:</u> ພຣະນິມິດ 4-5
<u>ຈຸດສຳຄັນຂອງບົດຮຽນນີ້:</u> ພຣະເມສານ້ອຍໄດ້ສິ້ນພຣະຊົນຂອງພຣະອົງ ເພື່ອໄຖ່ໂທດຄວາມຜິດບາບຂອງພວກເຮົາ ຊຶ່ງໄດ້ນຳພວກເຮົາມາສູ່ຄວາມພົ້ນ. ເທິງສວັນ ແລະແຜ່ນດິນໂລກຈິ່ງສັນລະເສີນ ພຣະກຣຸດຕິຍົດພຣະອົງພຣະຜູ້ດຽວ. ໃຫ້ພວກເຮົາມານະມັສການພຣະອົງສຸດຈິດ ສຸດໃຈ ແລະສຸດກຳລັງຂອງພວກເຮົາເຖີດ.
<u>ຄຳຖາມເພື່ອການສຳຫລວດ:</u> ແມ່ນຜູ້ໃດທີ່ພວກເຮົາໄດ້ຍົກໄວ້ເປັນທີ່ສູງສຸດໃນຊີວິດຂອງພວກເຮົາ?
<u>ຈຸດປະສົງຂອງບົດຮຽນນີ້:</u> ມອບຈິດຖວາຍກາຍນະມັສການພຣະອົງ.

<u>ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນ</u>

- ແບ່ງປັນຂ່າວປະເສີດຂອງອົງພຣະເຢຊູຄຣິດໃຫ້ກັບທຸກໆຄົນ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີຕໍ່ຄົນທັງປວງ.

<u>ແຜນການສຳລັບການສອນ</u>

<u>ຄຳແນະນຳພຣະທັມ ພຣະນິມິດ</u>

ພຣະທັມພຣະນິມິດໄດ້ຂຽນຂຶ້ນຕອນຂ້ອນທ້າຍຂອງສັຕວັດທີນຶ່ງ ເປັນພຣະທັມໃຫ້ການຫນູນໃຈພີ່ນ້ອງຊາວຄຣິສຕຽນຄາວນັ້ນຫລາຍ ໃນຂນະທີ່ພວກເຂົາຖືກການຂົ່ມເຫັງຍ້ອນຄວາມເຊື່ອຂອງພວກເຂົາ.
ອັຄສາວົກໂຢຮັນໃຫ້ພາບພົດຂອງຜູ້ອ່ານໃນສມັຍນັ້ນໃຫ້ເຫັນ ແລະເຂົ້າໃຈເຖິງເຫດທີ່ຖືກຂົ່ມເຫງ. ພວກເຂົາຕ້ອງຮູ້ ແລະເຂົ້າໃຈວ່າທີ່ພວກເຂົາຖືກຂົ່ມເຫັງຍ້ອນຄວາມເຊື່ອນັ້ນ ບໍ່ເປັນສິ່ງທີ່ແປກ. ແຕ່ສິ່ງທີ່ພວກເຂົາປະເຊີນຢູ່ບໍ່ຊ້າກໍໄວ.
ການທີ່ຈະເອົາຄວາມທຸກຍາກລຳບາກ ຍ້ອນຖືກຂົ່ມເຫັງນັ້ນມາທຽບກັບຣາຊອານາຈັກຂອງພຣະເຈົ້ານັ້ນ ກໍຫາທຽບບໍ່ໄດ້. ທ້າຍສຸດນີ້, ພຣະທັມພຣະນິມິດໄດ້ຊີ້ໃຫ້ເຫັນວ່າ ຄຣິສຕະຈັກທີ່ຖືກຂົ່ມເຫັງນັ້ນຈະໄດ້ຮັບຊັຍຊະນະຄວາມບາບ, ຊາຕານ, ແລະຄວາມຊົ່ວນັ້ນ. ມັນກໍມີວັນເວລາຂອງມັນ ແຕ່ວ່າພຣະເຈົ້າກໍຈະເປັນຜູ້ໄດ້ຮັບຊັຍຊະນະ. ສະນັ້ນແຫລະແນວຄິດນີ້ໄດ້ຝັງໄວ້ຢູ່ໃນຈິດໃຈຂອງພວກເຂົາຊຶ່ງຈະຊ່ອຍໃຫ້ພວກເຂົາມີກຳລັງໃຈໃນຂນະທີ່ຖືກຂົ່ມເຫັງ.
ອັຄສາວົກໄດ້ຂຍາຍຄວາມໃນພຣະທັມຕອນນີ້ ຊຶ່ງມີໃຈຄວາມສ່ວນໃຫຍ່ແລ້ວ ແມ່ນສຳລັບ <u>ຊາວຢິວໃນກຸ່ມຊອກສະແຫວງຫານິມິດຂອງຄາວສຸດທ້າຍ</u> (Jewish Apocalypticism) ສັບນີ້ຈະທອນຄືນຫລັງໄປຍັງຣະ

ຫວ່າງ ພຣະສັນຍາເດີມ ແລະ ພຣະສັນຍາໃຫມ່. ໃນຂນະນັ້ນພວກເຂົາໄດ້ສູ້ຮົບເພື່ອຍາດແຍ່ງເອົາເອກຣາຊ ຈາກຊົນຊາດອື່ນໆເປັນເວລາຫລາຍຮ້ອຍປີ ກ່ອນພຣະເຢຊູຄຣິດຈະໄດ້ສະເດັດມາບັງເກີດ (ປະມານ 400ປີ). ໃນຣະຍະເວລານັ້ນ ສາສນາຈານຂອງຊາວຢິວຈຶ່ງໄດ້ມີຄໍາສອນ ແລະຕີຄວາມຫມາຍບົ່ງບອກເຖິງເວລາໃຫ້ຜູ້ອ່ານໄດ້ຮູ້. ເພື່ອຈະຊ່ອຍໃຫ້ຜູ້ອ່ານ ແລະຜູ້ໄດ້ຟັງໃຫ້ມີຈິດໃຈອົດທົນຕໍ່ຄວາມທຸກຍາກລໍາບາກດ້ວຍຄວາມຫວັງວ່າ ພຣະເຈົ້ານັ້ນຍັງຊົງສະຖິດຢູ່ກັບພວກເຂົາ.

ວິທີການຂຽນວັນນະຄະດີ ເຣື່ອງການເປີດເຜີຍໃຫ້ເຫັນເຫດການລ່ວງຫນ້າ (Apocalyptic Literature) ໃຈຄວາມນັ້ນສ່ວນໃຫຍ່ຈະກ່າວເຖິງ ເຊັ່ນ ຄວາມດີຕໍ່ສູ້ກັບຄວາມຊົ່ວ, ຄວາມສວ່າງຕໍ່ສູ້ກັບຄວາມມືດ, ການຊົງສ້າງຕໍ່ສູ້ກັບຄວາມພິນາດ, ຄວາມບາບຕໍ່ສູ້ກັບຄວາມພົ້ນ, ປະວັດສາດກັບອະນາຄົດ. ກຸ່ມທີ່ເຊື່ອຖືນິມິດການເປີດເຜີຍໃຫ້ເຫັນເຫດການລ່ວງຫນ້ານັ້ນມີມາໄປຈົນຮອດສມັຍຂອງອັຄສາວົກໂຢຮັນ.

ຄຣິສຕຽນສມັຍຂອງອັຄສາວົກໂຢຮັນນັ້ນ ພວກເຂົາເຂົ້າໃຈໃນພຣະທັມນັ້ນ ແລະຮູ້ຄວາມຫມາຍສັນຍາລັກຂອງເຄື່ອງຫມາຍຕ່າງໆທີ່ກ່າວໃນພຣະທັມພຣະນິມິດ. ແຕ່ຜູ້ທີ່ຂົ່ມເຫັງພວກເຂົານັ້ນຈະບໍ່ເຂົ້າໃຈ.

<u>ຫລັກສາສນາສາດ ແລະອັກສອນສາດໃນພຣະນິມິດ</u>

ພຣະທັມພຣະນິມິດບໍ່ໄດ້ເປັນພຣະທັມທີ່ຢູ່ໂດດດ່ຽວຈາກພຣະທັມອື່ນໆໃນພຣະສັນຍາໃຫມ່. ພຣະທັມນີ້ຖືກຍອມຮັບຮູ້ເຂົ້າໃນພຣະສັນຍາໃຫມ່ໄດ້ໄວ້ແຕ່ເລີ້ມແລກ. ຫລັກສາສນາສາດທີ່ອັຄສາວົກໄດ້ສັ່ງສອນ ແລະບັນທຶກໄວ້ໃນພຣະທັມນີ້. ຊຶ່ງເປັນຫລັກຄໍາສອນກ່ຽວກັບການຊົງໄຖ່ທີ່ພຣະເຈົ້າຊົງກະທໍາໂດຍການຊົ້ນພຣະຊົນ ແລະການຄືນພຣະຊົນຂອງອົງພຣະເຢຊູຄຣິດ. ພຣະອົງໄດ້ຊົງຄອງຣາຊກັບພຣະເຈົ້າ. ຜູ້ໃດຍອມຮັບວ່າພຣະເຢຊູຄຣິດຊົງເປັນພຣະເຈົ້າຂອງຊີວິດຜູ້ນັ້ນຈະໄດ້ຮັບຄວາມພົ້ນ.

<u>ນໍາພາສຶກສາ</u>

- ໃຫ້ໃຊ້ເພງຂອງ Handel’s <u>Messiah</u> ແລະ ເປີດໃຫ້ນັກຮຽນຟັງ. “Worthy is the Lamb That Was Slain” ເພັງນີ້ມາຈາກພຣະນິມິດ (5:12-13) ແລະໃຫ້ອ່ານຂໍ້ຊໍ້ານັ້ນເປັນຫມູ່.
- ໃຫ້ນັກຮຽນອ່ານພຣະທັມພຣະນິມິດຕາມອາຈານສອນພຣະສັນຍາໃຫມ່ແນະນໍາໃນບົດຮຽນຂອງນັກຮຽນນັ້ນ.

<u>ຂໍ້ຄິດຫມູນໃຈນັກຮຽນ</u>

1. ຖ້າຜູ້ໃດສຶກສາພຣະທັມເຫລັ້ມນີ້ລົງເລິກເຊິ່ງແລ້ວ. ລາວຈະຮູ້ສຶກວ່າ ໃຈຄວາມຂອງພຣະທັມເຫລັ້ມນີ້. ໄດ້ຊີ້ບົ່ງບອກເຖິງພຣະເຈົ້າ, ຣາຊອານາຈັກຂອງພຣະເຈົ້າ, ກິຈການຊົງໄຖ່ບາບຂອງພຣະເຢຊູຄຣິດ ແລະພາຣະກິດຂອງພຣະວິນຍານບໍຣິສຸດ. ບໍ່ມີອັນໃດຈະວັດແທກຢັ່ງຮູ້ເຖິງຄວາມເລິກ, ຄວາມກວ້າງສຸດເຫນືອທີ່ຈະອາດມະໂນພາບໄດ້ທີ່ພຣະອົງໄດ້ກະທໍາຢູ່ຕລອດມາ.
2. ຈຸດເປົ້າຫມາຍຂອງພຣະທັມຂໍ້ນີ້ ກໍຄືວ່າໃຫ້ຜູ້ອ່ານຂອງອັຄສາວົກນັ້ນ ມີຄວາມຮູ້ສຶກມີການນະມັສການພຣະເຈົ້າ. ສໍາລັບຜູ້ອ່ານສມັຍນີ້ກໍໃຫ້ມີຄວາມຮູ້ສຶກເຊັ່ນດຽວກັນ.
3. ທຸກສິ່ງທີ່ພຣະອົງຊົງສ້າງກໍໄດ້ປະກາດເຖິງພຣະສະງ່າຣາສີຂອງພຣະອົງ ແລະສັນລະເສີນພຣະອົງແລ້ວບໍ່ແມ່ນບໍ? ພວກເຮົານັ້ນສັບສົນກັບຊີວິດຫລາຍຈົນບໍ່ຮູ້ສຶກຫຍັງຈັກແນວເລີຍແມ່ນບໍ?

4. ປະສົບການຂອງອັຄສາວົກໂຢຮັນທີ່ເກາະປັດໂມດ (ເປັນເກາະທີ່ພວກຄົນໂທດຢູ່) ໄດ້ຊີ້ບອກໃຫ້ພວກເຮົາເຫັນວ່າ ເຖິງແມ່ນວ່າພວກເຮົາຈະຢູ່ໃນສະພາບໃດກໍຕາມ ພວກເຮົາສາມາດນະມັສການພຣະເຈົ້າໄດ້.
5. ບາງຄົນອະທິບາຍວ່າການນະມັສການພຣະເຈົ້າຢ່າງຈິງໃຈຈະເປີດເຜີຍໃຫ້ເຫັນພຣະເຈົ້າ ແລະຣາຊອານາຈັກຂອງພຣະອົງຢ່າງແຈ່ມແຈ້ງ.
6. ການນະມັສການພຣະເຈົ້າດ້ວຍໃຈບໍຣິສຸດນັ້ນໄດ້ນໍາພວກເຮົາໄປປະຕິບັດໃນການດໍາເນີນຊີວິດ ເພື່ອສະທ້ອນໃຫ້ຄົນອື່ນເຫັນຣາຊອາຈັກຂອງພຣະເຈົ້າ ຕາມທີ່ພວກເຮົາໄດ້ມາຮູ້ພຣະເຈົ້າໃນອົງພຣະເຢຊູຄຣິດ.